ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ສິງຫາ 2025

ປີທີ 14

ສະບັບທີ 1030

ລາຍສັບປະດາ

## ຮອງປະທານສະພາແຫ່ງຊາດ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9



(ສພຊ) - ວັນທີ 5-9 ສິງຫາ2025, ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດນຳໂດຍທ່ານປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ), ທ່ານ ກິງແກ້ວ ມີວໍລະຈັກ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ທັງເປັນປະທານສະພາປະ

ອ່ານຕໍ່ໜ້າ 7

## ສພຊ ຈັດພິທີປາຖະກະຖາວັນລັດຖະທຳມະນູນ



(ສພຊ) - ເພື່ອທວນຄືນວັນລັດຖະທຳມະນູນແຫ່ງຊາດ ແລະ ໂຄສະນາເຜີຍແຜ່ເຊື່ອມຊຶມເນື້ອໃນລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2025 ໃຫ້ພະນັກງານພາຍໃນສະພາແຫ່ງຊາດ (ສພຊ); ວັນທີ 14 ສິງຫາຜ່ານມາ, ສະພາແຫ່ງຊາດ ໄດ້ຈັດພິທີປາຖະກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 34 ປີ (15/8/1991-15/8/2025) ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ທວນຄືນໃຫ້ເຫັນເຖິງຄວາມໝາຍຂອງລັດຖະທຳມະນູນ ແລະ ວັນລັດຖະທຳມະນູນແຫ່ງຊາດ; ຄວາມສຳ

ອ່ານຕໍ່ໜ້າ 12



### ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການສ້າງຄອບຄົວແບບໃໝ່ ແມ່ນຄວາມຮັບຜິດຊອບຂອງໝົດທັງສັງຄົມ ແຕ່ວ່າເວົ້າເຖິງຄອບຄົວ ກ່ອນອື່ນແມ່ນຕ້ອງເວົ້າເຖິງແມ່ຍິງ, ເພາະແມ່ຍິງມີຄວາມສາມາດແລະມີບົດບາດອັນໃຫຍ່ຫຼວງທີ່ສຸດ ໃນການກໍ່ສ້າງຄອບຄົວ ແລະ ໃນການປະຕິບັດພາລະບົດບາດຂອງຄອບຄົວ.

(ສັງລວມບົດໂອ້ລົມຕໍ່ຂັ້ນສູນກາງ, ໜ້າ 48)

ເຜົ່າໃດໆ ກໍເສີມຂະຫຍາຍອັນດີ, ອັນງາມ ກ່ຽວກັບວັດທະນະທຳ ແລະ ສິລະປະວັນນະຄະດີຂອງຕົນ, ແຕ່ກໍຕ້ອງຮັບເອົາອັນດີ, ອັນງາມ ກ່ຽວກັບວັດທະນະທຳ, ສິລະປະວັນນະຄະດີ ຂອງເຜົ່າອ້າຍນ້ອງອື່ນໆ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 77)

ອ່ານຕໍ່ສະບັບໜ້າ




## ກຳນົດວັນທີ 4 ສິງຫາ ເປັນວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ



(ສພຊ) - ຕອນບ່າຍວັນທີ 5 ສິງຫານີ້, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ຜູ້ຊີ້ນຳວຽກງານກົດໝາຍ ແລະ ວຽກງານຄົ້ນຄວ້ານິຕິກຳຂອງ ສພຊ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການອອກມະຕິ ແລະ ຄຳແນະນຳທີ່ສຳຄັນຂອງຄະນະປະຈຳສະພາແຫ່ງຊາດ ຄື: 1) ມະຕິສະບັບເລກທີ 197/ຄປຈ, ລົງວັນທີ 22 ກໍລະກົດ 2025 ວ່າດ້ວຍການຂຽນມາດຕາຂອງກົດໝາຍໃສ່ເອກະສານທາງລັດຖະການ; 2) ມະຕິສະບັບເລກທີ 203/ຄປຈ, ລົງວັນທີ 30 ກໍລະກົດ 2025 ກ່ຽວກັບການປັບປຸງການໃສ່ສີເຄື່ອງໝາຍຊາດ; 3) ມະຕິສະບັບເລກທີ 204/ຄປຈ, ລົງວັນທີ 30 ກໍລະ ກົດ 2025 ກ່ຽວກັບການກຳນົດວັນສ້າງຕັ້ງສະພາປະຊາຊົນທ້ອງຖິ່ນ ແລະ ການກຳນົດການຈັດຊຸດສະພາປະຊາຊົນຂັ້ນແຂວງ ແລະ 4) ຄຳແນະນຳສະບັບເລກທີ 16/ຄປຈ, ລົງວັນທີ 11 ກໍລະກົດ 2025 ກ່ຽວກັບການປະຖາກະຖາວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 34 ປີ ແລະ ການໂຄສະນາເຜີຍແຜ່ລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2025 ເຊິ່ງທ່ານໃຫ້ຮູ້ວ່າ:

ອ່ານຕໍ່ໜ້າ 6

## ຂະບວນແຂ່ງຂັນແລ່ນສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ




ອ່ານຕໍ່ໜ້າ 8

## ສະຫຼຸບວຽກງານປ້ອງກັນພາຍໃນແລະໜ່ວຍປ້ອງກັນຕົວ



(ສພຊ) - ວັນທີ 11 ສິງຫານີ້, ຄະນະປ້ອງກັນພາຍໃນ ແລະ ການປ້ອງກັນຕົວ ຂອງສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈຳ 6 ເດືອນຕົ້ນປີ ແລະ ວາງທິດທາງແຜນການ 6 ເດືອນທ້າຍປີ 2025 ໂດຍການເປັນປະທານຂອງສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນຫົວໜ້າຄະນະປ້ອງກັນພາຍໃນ ສພຊ, ມີບັນດາສະຫາຍເລຂາ, ຮອງເລຂາ ແລະ ຕາງໜ້າຈາກຮາກຖານພັກອ້ອມຂ້າງອົງຄະນະພັກ ສພຊ, ສະຫາຍຫົວໜ້າກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບພ້ອມດ້ວຍຄະນະ

ອ່ານຕໍ່ໜ້າ 7



ໝາກໄມ້ພື້ນບ້ານ... (ໜ້າ 9)




ສະພາຕໍ່າສະຫະລັດ... (ໜ້າ 10)




ມີໜ້ອຍແຕ່ມີປະສິດທິພາບ... (ໜ້າ 12)

## ຂໍ່ານັບຊົມເຊີຍວັນຍຶດອຳນາດ ຄົບຮອບ 50 ປີ (23/8/1975 - 23/8/2025) ຍ່າງສຸດໃຈ!

# ພົທ. ສຸວອນ ເລືອງບຸນມີ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ຢູ່ແຂວງໄຊຍະບູລີ




(ສພຊ) - ວັນທີ 1-8 ສິງຫາຜ່ານມາ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ (ສພຊ) ພ້ອມດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 7 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ແລະ ຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີIXແລະສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ຢູ່: ບ້ານເມືອງໝໍ ແລະ ເທດສະບານເມືອງແກ່ນທ້າວ, ບ້ານຕາລີ່ງ ແລະ ເທດສະບານເມືອງບໍ່ແຕນ, ບ້ານນາສັກ ແລະ ເທດສະບານເມືອງປາກລາຍ, ບ້ານສະຫວ່າງ ແລະ ເທດສະບານເມືອງທົ່ງມີໄຊ, ບ້ານນາຊົງ ແລະ ເທດສະບານເມືອງພຽງ, ບ້ານນາຫຼາ ແລະ ເທດສະບານແຂວງໄຊຍະບູລີ ໂດຍການຕ້ອນຮັບຂອງເລຂາພັກເມືອງ, ຄະນະປະຈຳພັກເມືອງ ເຊິ່ງມີພະນັກງານ-ລັດຖະກອນ, ນາຍແລະພົນຕຳຫຼວດ-ທະຫານ, ເລຂາພັກບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານໂດຍສັງເຂບສະພາບການຈັດຕັ້ງປະຕິບັດວຽກງານຂອງແຕ່ລະພາກສ່ວນ. ຈາກນັ້ນ, ສສຊ-ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ເຊິ່ງໄດ້ພິຈາລະນາຮັບຮອງເອົາຫຼາຍບັນຫາສຳຄັນຂອງຊາດ ເປັນຕົ້ນບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ2025;ບົດລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່; ບົດລາຍງານການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ;ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX; ການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ ໃນນີ້, ສ້າງໃໝ່ 5 ສະບັບ. ກອງປະຊຸມສະໄໝສາມັນເທື່ອທີ9ຂອງ ສພຂ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງເປັນຕົ້ນບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; ບົດລາຍງານການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ທົ່ວແຂວງໄລຍະ 5 ປີ (2021-2025) ແລະ ທິດທາງແຜນການ 5 ປີ (2026-2030); ການປະເມີນນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ 3 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ແລະອະນຸລັກຊ້າງບ້ານ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ; ແລະ ການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ11ເມືອງຂອງແຂວງ.

ທ່ານ ພົທ. ສຸວອນເລືອງບຸນມີໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານຮອບດ້ານທີ່ຍາດມາໄດ້ໃນໄລຍະຜ່ານມາ ແລະ ຕີລາຄາສູງຕໍ່ຄວາມດຸໝັ່ນແລະການມີຫົວຄິດພັດທະນາຂອງປະຊາຊົນ ທັງເນັ້ນໜັກ ແລະ ໃຫ້ທິດຊີ້ນຳແກ່ອຳນາດການປົກຄອງເມືອງ, ບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ຈົ່ງພ້ອມກັນຮັກສາຄວາມສາມັກຄີ, ຮັກແພງເຊິ່ງກັນແລະກັນ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດໃນຄອບຄົວຂອງຕົນ ໃຫ້ມີຄວາມເຂັ້ມແຂງ ເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານ ພົທ. ສຸວອນ ເລືອງບຸນມີ ແລະ ຄະນະ ຍັງໄດ້ຕິດຕາມໂຄງການຕ້ານເຈື່ອນຢູ່ເມືອງບໍ່ແຕນ ແລະ ເມືອງແກ່ນທ້າວ.

**(ນາງ ອາລິນ ສຸພົມມະປະກິດ)**




# ປະທານ ກຜງສ ເຄື່ອນໄຫວວຽກງານຢູ່ຫຼວງພະບາງ



(ສພຂ) - ວັນທີ 7-9 ສິງຫາຜ່ານມາ, ທ່ານ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ປະທານກຳມາທິການແຜນການ, ການເງິນແລະການກວດສອບ(ກຜງສ)ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງຫຼວງພະບາງ; ຈຸດປະສົງແມ່ນເພື່ອຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ປະຈຳປີ 2024, ການຈັດເກັບລາຍຮັບການສົ່ງອອກແຮ່ທາດ, ການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບມະຕິຂອງສະພາແຫ່ງຊາດ (ສພຊ) ວ່າດ້ວຍ ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນແລະເພື່ອເກັບກຳຂໍ້ມູນ ພ້ອມທັງຕີລາຄາຜົນໄດ້ຮັບ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂໃນຕໍ່ໜ້າ ໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການພິຈາລະນາຮັບຮອງເອົາວຽກງານຂົງເຂດດັ່ງກ່າວ ໃນກອງປະຊຸມຄັ້ງປະຖົມມະລືກຂອງ ສພຊ ຊຸດທີ X.

ການເຄື່ອນໄຫວຄັ້ງນີ້ ໄດ້ເຮັດວຽກຮ່ວມກັບທ່ານປອ. ບຸນເຫຼືອ ສິນໄຊວໍຣະວົງ ຮອງເລຂາພັກແຂວງ, ຮອງເຈົ້າແຂວງຫຼວງພະບາງ, ທ່ານ ສົມພອນ ສີອຸດົມພັນ ກຳມະການພັກແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 6, ທ່ານ ສົມມາລີ ຄຳເກົ່າ ກຳມະການພັກແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 6 ທັງເປັນປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງໃນຂົງເຂດເສດຖະກິດຂອງແຂວງ ໂດຍໄດ້ຮັບຟັງການລາຍງານຈາກອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ-ການເງິນຂອງແຂວງ; ພ້ອມດຽວກັນ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ.

ຈາກນັ້ນ, ຄະນະທີມງານຈາກສພຊແລະສະພາປະຊາຊົນແຂວງ ຍັງໄດ້ລົງຕິດຕາມກວດກາຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຂອງຈຸດຫຼວງພະບາງແລະໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ຂອງບໍລິສັດ ທຽນຈິນຫົວຄານ ອີກດ້ວຍ.

**(ຄຳຫຼ້າ ວູ່ຊົງ)**

# ກອງປະຊຸມສຳມະນາສຳລັບສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນ ທີ່ ສປຈີນ



(ສພຊ) - ລະຫວ່າງວັນທີ 27 ກໍລະກົດ - 6 ສິງຫາ 2025 ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາສຳລັບສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນ ທີ່ນະຄອນຫຼວງປັກກິ່ງ, ແຂວງຈຽງຊູ ແລະ ແຂວງຢຸນນານ, ສປຈີນ ເຊິ່ງມີຄະນະຜູ້ແທນ 24 ທ່ານ ຈາກ 5 ປະເທດ ຄື: ກຳປູເຈຍ, ລາວ, ມາເລເຊຍ, ໄທແລະຫວຽດນາມເຂົ້າຮ່ວມ; ກອງປະຊຸມຄັ້ງນີ້ ຈັດຂຶ້ນໂດຍສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ພາຍໃຕ້ທຶນສະໜັບສະໜູນຂອງກະຊວງການຄ້າຈີນ, ມີຈຸດປະສົງເພື່ອແລກປ່ຽນບົດຮຽນກ່ຽວກັບການພັດທະນາຕາມຂົງເຂດວຽກງານຕ່າງໆຂອງ ສປຈີນ ກັບ ລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນ.

ໃນກອງປະຊຸມ, ຄະນະຜູ້ແທນໄດ້ລົງເລິກແລກປ່ຽນສົນທະນາແລະຖອດຖອນບົດຮຽນພາຍໃຕ້ຫົວຂໍ້ຕ່າງໆ ເຊັ່ນ: ການກ້າວໄປສູ່ລະບົບປະຊາທິປະໄຕທີ່ມີລັກສະນະສະເພາະຂອງປະເທດໃນຕໍ່ໜ້າ; ການປະຕິຮູບ, ການທົບທວນຄືນ ແລະ ການຕິດຕາມກວດກາງົບປະມານຂອງຈີນ; ການແກ້ໄຂຄວາມທຸກຍາກ ແລະການພັດທະນາຊົນນະບົດ; ການຍາດແຍ່ງໂອກາດຈາກການປະຕິວັດເຕັກໂນໂລຊີ; ການຮ່ວມກັນຮັບມືກັບສະພາບອາກາດທີ່ປ່ຽນແປງ ເພື່ອອະນາຄົດທີ່ຍືນຍົງ; ການສົ່ງເສີມທ່າແຮງຂອງອາຊຽນ ເພື່ອຄວາມເປັນເອກະພາບແລະຄວາມສາມັກຄີ. ນອກຈາກນັ້ນ, ຄະນະຜູ້ແທນໄດ້ໄປຢ້ຽມຊົມຫໍພິພິທະພັນພັກກອມມູນິດຈີນ, ທັດສະນະແລະແລກປ່ຽນບົດຮຽນກັບສະພາຜູ້ແທນປະຊາຊົນແຂວງຈຽງຊູ ແລະ ແຂວງຢຸນນານ, ຢ້ຽມຢາມພື້ນຖານການພັດທະນາທີ່ສຳຄັນບາງແຫ່ງ ເຊັ່ນ: ກຸ່ມບໍລິສັດ SUMEC, ບໍລິສັດພັດທະນາດ້ານໂທລະຄົມ ແລະ ເຕັກໂນໂລຊີການບິນບໍ່ມີຄົນຂັບ ຂອງ ສປຈີນ, ໂຮງງານຜະລິດລົດ ສາງ

ອ່ານຕໍ່ໜ້າ 6

# ສສຊ ແລະ ສສຂ ພົບປະຜູ້ມີສິດ ເລືອກຕັ້ງຢູ່ 3 ເມືອງ ແຂວງໄຊຍະບູລີ




(ສພຂ) - ວັນທີ 4-6 ສິງຫາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ມີທ່ານ ປອ. ລີເບີ ລີບົ່ວປາວ ປະທານກຳມາທິການແຜນການ, ການເງິນແລະການກວດສອບ, ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານບຸນລ້ວນ ຊິມສີຫາປັນຍາ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7 ແລະ ທ່ານ ສົມມະນາປິ່ນທິບພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງໄດ້ລົງເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະສະພາປະຊາຊົນແຂວງ (ສພຂ) ຊຸດທີII ທັງພົບປະຜູ້ມີສິດເລືອກຕັ້ງຢູ່ 5 ຈຸດຂອງເມືອງຄອບ ຄື: ສຳນັກງານອົງການອ້ອມຂ້າງເມືອງ, ບ້ານປາງໄຮ, ບ້ານຫ້ວຍເລົາ, ບ້ານຖ້ຳ ແລະ ບ້ານປາງມອນ ໂດຍມີອົງການປົກຄອງເມືອງ-ບ້ານ ແລະຜູ້ມີສິດເລືອກຕັ້ງເຂົ້າຮ່ວມຢ່າງພ້ອມພຽງ; 4 ບ້ານຂອງເມືອງຊຽງຮ່ອນ ຄື: ດອນມູນ, ປ່າຫວ້ານ, ສາມັກຄີໄຊ ແລະ ພູລ້ານ ເຊິ່ງມີອຳນາດການປົກຄອງບ້ານ ຕະຫຼອດຮອດຜູ້ມີສິດເລືອກຕັ້ງເຂົ້າຮ່ວມທັງໝົດ 518 ຄົນ, ຍິງ 338 ຄົນ ແລະ ພົບປະພະນັກງານອ້ອມຂ້າງເມືອງ, ນາຍບ້ານເທດສະບານ ແລະ 4 ບ້ານຂອງເມືອງທົ່ງສາຄື: ນາປຸງ, ແທນຄຳ, ໂພນໄຊ ແລະ ສີມຸງ ໂດຍມີທ່ານ ພອນສະຫວັນ ໄຊສົມພົນ ກຳມະການພັກແຂວງ, ເລຂາພັກເມືອງ, ທ່ານແຫຼ້ອ່ອນສົມບູນ ຮອງເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ, ຫົວໜ້າຄະນະສສຂ ປະຈຳເຂດເລືອກຕັ້ງເມືອງ ແລະ ທ່ານ ອ່ອນຈັນ ບຸນຍາວົງ ຮອງປະທານຄະນະກຳມະການປົກຄອງເມືອງ ໃຫ້ການຕ້ອນຮັບ.

ເນື້ອໃນນຳໄປເຜີຍແຜ່ປະກອບມີ 15 ມະຕິທີ່ກອງປະຊຸມສະໄໝສາມັນເທື່ອທີ9ຂອງ ສພຊ ຮັບຮອງເອົາ: 1. ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; 2. ບົດລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່; 3. ບົດລາຍງານການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ; 4. ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ; 5. ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX; ມະຕິຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ, ໃນນີ້ສ້າງໃໝ່ 5 ສະບັບ ຄື: 1) ກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ, 2) ກົດໝາຍວ່າດ້ວຍສັງຄົມສົງເຄາະ, 3) ກົດໝາຍວ່າດ້ວຍສາມັນສຶກສາ, 4) ກົດໝາຍວ່າດ້ວຍການປູກຝັງ, 5) ກົດໝາຍວ່າດ້ວຍຄວາມປອດໄພໄຊເບີ ແລະ ປັບປຸງ 5 ສະບັບ ຄື: 1) ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ, 2) ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ, 3) ກົດໝາຍວ່າດ້ວຍຊົນລະປະທານ, 4) ກົດໝາຍວ່າດ້ວຍອາກອນລາຍໄດ້, 5) ກົດໝາຍວ່າດ້ວຍປ້າຍ. ມະຕິທີ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ຮັບຮອງເອົາ: 1. ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະທິດທາງແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດ ແລະ ການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ; 2. ບົດລາຍງານການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍທົ່ວແຂວງ ໄລຍະ 5 ປີ (2021-2025) ແລະ ທິດທາງແຜນການ5ປີ(2026-2030); 3. ການປະເມີນນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ 3 ສະບັບຄື: 1) ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊ້າງບ້ານ, 2) ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນແລະຕ້ານຢາເສບຕິດ, 3) ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ; 4 . ການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ11ເມືອງຂອງແຂວງ. ທັງໝົດນີ້ ກໍເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງ ຮັບຮູ້-ເຂົ້າໃຈເຖິງບັນຫາສຳຄັນຂອງຊາດແລະຂອງແຂວງເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.




# ເອກະພາບຂັ້ນສຸດທ້າຍ ປຶ້ມ 50 ປີ ສາຍພົວພັນ ສພຊ ລາວ-ຫວຽດນາມ

(ສພຊ) - ກອງປະຊຸມເພື່ອເປັນເອກະພາບຂັ້ນສຸດທ້າຍດ້ານເນື້ອໃນ ແລະ ເຕັກນິກທັງໝົດ ຂອງປຶ້ມ "50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດແຫ່ງ ສປປລາວ ແລະ ສະພາແຫ່ງຊາດແຫ່ງສສ.ຫວຽດນາມ, ການຮ່ວມມືຮອບດ້ານແລະພັດທະນາ" ໄດ້ຈັດຂຶ້ນໃນວັນທີ 7-12 ສິງຫານີ້ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ເຂົ້າຮ່ວມມີທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ), ທ່ານປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ທ່ານຮອງປະທານກຳມາທິການການຕ່າງປະເທດ, ທ່ານຮອງເລຂາທິການສະພາແຫ່ງຊາດ, ທ່ານຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ພ້ອມດ້ວຍຄະນະກົມຈາກ ສພຊ, ຄະນະພົວພັນຕ່າງປະເທດສູນກາງພັກ, ກະຊວງການຕ່າງປະເທດ, ບັນດາພະນັກງານອາວຸໂສບຳນານແລະພະນັກງານທີ່ກ່ຽວຂ້ອງ.



ທ່ານ ສັນຍາ ປຣະເສີດ ກ່າວວ່າ: ກອງປະຊຸມຄັ້ງນີ້ແມ່ນສືບຕໍ່ຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ເປັນເອກະພາບກັນດ້ານເນື້ອໃນແລະເຕັກນິກທັງໝົດ ຂອງປຶ້ມ "50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, ການຮ່ວມມືຮອບດ້ານ ແລະ ພັດທະນາ" ເພື່ອຈະນຳໄປປຶກສາຫາລືແລະຕົກລົງຂັ້ນສຸດທ້າຍກັບຝ່າຍຫວຽດນາມ ກ່ອນຈະເຂົ້າເຫຼັ້ມຈັດພິມອອກມາ ຄາດຄະເນໃນກາງເດືອນສິງຫານີ້.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບລວມໃນການສ້າງປຶ້ມໃນໄລຍະຜ່ານມາ; ຈາກນັ້ນ, ກໍລົງເລິກເຮັດວຽກຮ່ວມກັນ ໂດຍກອງເລຂາຊ່ວຍວຽກໄດ້ອ່ານເນື້ອໃນຂອງປຶ້ມໄປເທື່ອລະໜ້າ ເພື່ອຕິດຕາມ, ປະກອບຄຳເຫັນໃສ່ຈຸດທີ່ເຫັນວ່າຍັງບໍ່ຊັດເຈນ ແລະ ແປງໄປພ້ອມກັນພ້ອມທັງກວດກາເບິ່ງປະໂຫຍກ, ຄຳສັບລະອຽດ ໂດຍສະເພາະບັນ ຫາທີ່ເຫັນວ່າຍັງລໍ່ແຫຼມແລະເພື່ອຮັບປະກັນຄວາມເປັນເອກະພາບທາງດ້ານເນື້ອໃນຂອງປຶ້ມ ໃຫ້ມີຄວາມອຸດົມສົມບູນຍິ່ງໆຂຶ້ນ.

ປຶ້ມ 50 ປີປະຫວັດສາດເຫຼັ້ມນີ້ຈະເປັນມໍລະດົກຕົກທອດໃຫ້ແກ່ຄົນຮຸ່ນນີ້ ແລະ ຮຸ່ນຕໍ່ໄປໄດ້ສຶກສາຄົ້ນຄວ້າ, ຊອກຮູ້ຮໍ່າຮຽນ ແລະ ຮັບຮູ້ມູນເຊື້ອປະຫວັດສາດແຫ່ງການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ ພ້ອມທັງສືບທອດປົກປັກຮັກສາ, ເພີ່ມພູນຄູນສ້າງແລະເສີມຂະຫຍາຍມູນເຊື້ອທີ່ເປັນຊັບສົມບັດອັນລ້ຳຄ່າຂອງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ, ຫວຽດນາມ-ລາວ ເພື່ອເອກະລາດ, ເສລີພາບ, ສັນຕິພາບແລະຄວາມວັດທະນະຖາວອນຂອງສອງປະເທດ.

**(ສອນສັກ ວັນວິໄຊ)**



ນອກຈາກນີ້, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີບັນຫາຕ່າງໆ ທີ່ຜູ້ມີສິດເລືອກຕັ້ງຕ້ອງການໃຫ້ສະມາຊິກສະພານຳໄປສົມທົບກັບພະແນການ, ອົງການແລະກົມກອງທີ່ກ່ຽວຂ້ອງພິຈາລະນາແກ້ໄຂ ເຊິ່ງບັນຫາທີ່ຜູ້ມີສິດເລືອກຕັ້ງເມືອງຊຽງຮ່ອນສະເໜີ ແມ່ນຢາກໃຫ້ມີການຊ່ວຍເຫຼືອພໍ່ແມ່ປະຊາຊົນຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດນ້ຳໄຫຼຊຸເຮືອນຊານບ້ານຊ່ອງ ແລະ ພື້ນທີ່ທຳການຜະລິດ ເປັນຕົ້ນ; ໂອກາດນີ້, ສພຂ ໄດ້ມອບເງິນຊຸກຍູ້ຊ່ວຍເຫຼືອບັນເທົາທຸກໃຫ້ເມືອງ 3 ລ້ານກີບ.

**(ໂພໄຊ ແກ້ວກັນຍາ)**



# ພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງຢູ່ ເມືອງໂພນໄຊ ແລະ ນະຄອນຫຼວງພະບາງ



(ສພຊ) - ວັນທີ 3-8 ສິງຫາຜ່ານມາ, ທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6ແຂວງຫຼວງພະບາງພ້ອມດ້ວຍຄະນະ ໄດ້ລົງພົບປະຢ້ຽມຢາມພະນັກງານ, ທະຫານ-ຕຳຫຼວດ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າຢູ່ເມືອງໂພນໄຊແລະນະຄອນຫຼວງພະບາງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 1,432 ຄົນ, ຍິງ 1,070 ຄົນ; ຈຸດປະສົງກໍເພື່ອນຳເອົາບັນດາບັນຫາສຳຄັນພື້ນຖານຂອງປະເທດຊາດແລະຂອງແຂວງ ທີ່ ສສຊ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ສຸມເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີIXແລະສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II ເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງ ມີຄວາມຮັບຮູ້,ເຂົ້າໃຈແລະມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.

ພ້ອມດຽວກັນ,ຍັງຖືເອົາໂອກາດອັນສຳຄັນນີ້ ເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນ ແລະ ເກັບກຳຂໍ້ມູນກ່ຽວກັບສະພາບການຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມຢູ່ເມືອງ-ນະຄອນ ແລະ ບ້ານ ເພື່ອສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ. ຜ່ານການຮັບຟັງການລາຍງານຈາກອຳນາດການປົກຄອງເມືອງ-ນະຄອນ,ບ້ານເຫັນວ່າສະພາບການພັດທະນາເສດຖະກິດ-ສັງຄົມໄດ້ຮັບການພັດທະນາ, ລູກຫຼານໄດ້ຮັບການສຶກສາ, ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ; ຄຽງຄູ່ກັນນັ້ນ, ພໍ່ແມ່ປະຊາຊົນຍັງໄດ້ສະເໜີໃຫ້ພັກ-ລັດ ປັບປຸງເສັ້ນທາງ-ຂົວທີ່ເປ່ເພໃນລະດູຝົນ, ເສັ້ນທາງໄປບ່ອນທຳການຜະລິດ, ສະໜອງທຶນ ແລະ ເຕັກນິກ ໃນການປູກການລ້ຽງ, ການຂະຫຍາຍຕາຂ່າຍໄຟຟ້າໃຫ້ພຽງພໍ.

ການລົງເຄື່ອນໄຫວຄັ້ງນີ້, ທ່ານ ນາງ ມະນີວັນ ເຍຍປາວເຮີ ຍັງໄດ້ໄປຢ້ຽມຢາມນັກຮຽນຢູ່ໂຮງຮຽນ ມສ ເດັກກຳພ້າແຂວງຫຼວງພະບາງ ພ້ອມທັງມອບເຄື່ອງນຸ່ງຫົ່ມຈຳນວນໜຶ່ງໃຫ້ນັກຮຽນ ແລະ ມອບຄອມພິວເຕີຕັ້ງຕັກ ແລະເຄື່ອງພິມ 1 ຊຸດ, ປຶ້ມແບບຮຽນຊັ້ນປະຖົມ ປ1 ຮອດຊັ້ນມັດທະຍົມ ມ6 ຈຳນວນ 33 ຊຸດ ລວມມູນຄ່າທັງໝົດ 27,676,000 ກີບ ໃຫ້ເມືອງໂພນໄຊ ແລະ ມອບຄອມພິວເຕີຕັ້ງຕັກ ແລະ ເຄື່ອງພິມ 1 ຊຸດ ມູນຄ່າ 11,094,000 ກີບ ໃຫ້ນະຄອນຫຼວງພະບາງ.

**(ຄຳດີ ພັນທະລີ)**



# ມອບ-ຮັບໝວກ ເພື່ອຊຸກຍູ້ຂະບວນການແຂ່ງຂັນກິລາແລ່ນ



(ສພຊ) - ຕອນສວາຍວັນສຸກທີ 8 ສິງຫາຜ່ານມາ ທີ່ສະພາແຫ່ງຊາດໄດ້ມີພິທີມອບ-ຮັບໝວກຈຳນວນ500ໜ່ວຍ ຈາກບໍລິສັດ ສະຕາໂທລະຄົມ (ຢູນິເທວ) ໃຫ້ແກ່ສະພາແຫ່ງຊາດ ເພື່ອປະກອບສ່ວນຊຸກຍູ້ຂະບວນການແຂ່ງຂັນກິລາແລ່ນສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 34 ປີ (15/8/1991-15/8/2025), ຕາງໜ້າມອບໂດຍທ່ານ ສິນທະພອນ ວົງໄຊ ຮອງອຳນວຍການສູນສະໜອງເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດດັ່ງກ່າວ ແລະຕາງໜ້າຮັບໂດຍທ່ານປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ປອ. ອາຄົມ ປຣະເສີດ ໄດ້ສະແດງຄວາມຂອບໃຈແລະມອບໃບຊົມເຊີຍຂອງຄະນະເລຂາທິການສະພາແຫ່ງຊາດ ໃຫ້ບໍລິສັດ ສະຕາໂທລະຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**

# ຕິດຕາມກວດກາວຽກງານຍຸຕິທຳ ຢູ່ຈຳປາສັກ ແລະ ສະຫວັນນະເຂດ



(ສພຊ) - ວັນທີ 4-5 ສິງຫານີ້, ທ່ານ ສຈ. ປອ. ວຽງວິໄລ ທ່ຽງຈັນໄຊ ຮອງປະທານກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດໂດຍໄດ້ສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປີດກອງປະຊຸມເຮັດວຽກຮ່ວມກັບບັນດາພະແນກການ-ກົມກອງໃນຂົງເຂດຍຸຕິທຳຂອງແຂວງ ເຊິ່ງມີອົງການກວດກາລັດ, ສານປະຊາຊົນພາກໃຕ້-ແຂວງ, ອົງການໄອຍະການປະຊາຊົນພາກໃຕ້-ແຂວງ, ພະແນກຍຸຕິທຳ, ອົງການສືບສວນ-ສອບສວນ(ເຈົ້າໜ້າທີ່ຕຳຫຼວດ), ກອງປະຕິບັດຄຳຕັດສິນຂອງສານ, ຂະແໜງການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້, ກໍເພື່ອຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ (ສພຊ) ໃນຂົງເຂດຍຸຕິທຳ ກໍຄືການເຄື່ອນໄຫວວຽກງານ ແລະ ທິດທາງແຜນການຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ໂດຍສະເພາະການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນ ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ2025 ສະບັບເລກທີ 141/ສພຊ ແລະ 142/ສພຊ, ລົງວັນທີ 11 ທັນວາ 2024 ພ້ອມທັງຕິດຕາມກວດກາການປະຕິບັດວຽກງານຂົງເຂດຍຸຕິທຳຂອງພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງການລາຍງານການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ,ກົດໝາຍ,ມະຕິກອງປະຊຸມສະພາແຫ່ງຊາດແລະມະຕິກອງປະຊຸມສະພາປະຊາຊົນແຂວງ ໃນຂົງເຂດຍຸຕິທຳ 6 ເດືອນຕົ້ນປີ 2025 ກໍຄືການຈັດຕັ້ງປະຕິບັດວຽກງານວິຊາສະເພາະຈາກບັນດາພະແນກການ-ກົມກອງ ໃນຂົງເຂດຍຸຕິທຳຂອງແຂວງ ເຊິ່ງສາມາດເຫັນໄດ້ຜົນສຳເລັດທີ່ສາມາດຈັດຕັ້ງປະຕິບັດ ແລະ ຂໍ້ຄົງຄ້າງບາງດ້ານ ທີ່ຈະຕ້ອງໄດ້ສືບຕໍ່ປະຕິບັດໃຫ້ສຳເລັດ; ຈາກນັ້ນ, ກໍໄດ້ມີການປະກອບຄຳເຫັນ, ເຈາະຈີ້ມຕໍ່ຫຼາຍບັນຫາຂໍ້ຫຍຸ້ງຍາກ ເພື່ອແລກປ່ຽນບົດຮຽນ ແລະ ນຳສະເໜີວິທີແກ້ໄຂ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ສຳເລັດ.

ທ່ານ ສຈ. ປອ. ວຽງວິໄລ ທ່ຽງຈັນໄຊ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ ພ້ອມທັງເນັ້ນໃຫ້ທຸກພາກສ່ວນສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນໃຫ້ມີຜົນສຳເລັດ ແລະ ຮັບປະກັນປະສິດທິພາບ ເຊິ່ງຈະນຳເອົາຂໍ້ມູນທີ່ໄດ້ຮັບ ໄປເປັນບ່ອນອີງໃນການຄົ້ນຄວ້າ, ສະໜອງຂໍ້ມູນໃຫ້ຄະນະປະຈຳສະພາແຫ່ງຊາດໃນການມີຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ໃນວາລະການເຄື່ອນໄຫວວຽກງານຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດແລະພາກສ່ວນອື່ນທີ່ກ່ຽວຂ້ອງໃນຂົງເຂດຍຸຕິທຳ ທັງຈະເປັນບ່ອນອີງໃນການປຶກສາຫາລື ແລະ ສະເໜີພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ມີມາດຕະການແກ້ໄຂ.

ນອກຈາກນີ້, ຄະນະຍັງໄດ້ລົງຕິດຕາມສັງເກດການຕົວຈິງກ່ຽວກັບການພິຈາລະນາຕັດສິນຄະດີອາຍາທີ່ຫ້ອງປະຊຸມສານປະຊາຊົນແຂວງສະຫວັນນະເຂດອີກດ້ວຍ.

ກ່ອນໜ້ານັ້ນ, ຮອງປະທານກຳມາທິການຍຸຕິທຳພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວສະຫວັນນະເຂດ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວເຮັດວຽກ.

**(ສົມວິຈິດ ໄຊມິນຕີ)**



# 6 ເດືອນຕົ້ນປີ ເສດຖະກິດແຂວງ ຫຼວງພະບາງ ຂະຫຍາຍຕົວເກືອບ 4%




(ສພຂ)-ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງ (ສພຂ) ຫຼວງພະບາງ ຊຸດທີ II ໄດ້ປິດລົງເມື່ອວັນທີ25ກໍລະກົດຜ່ານມາໂດຍການເປັນປະທານຂອງທ່ານ ສິງຕັນ ໄຊລືຊົ່ງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພາຍຫຼັງດຳເນີນມາເປັນເວລາສອງວັນດ້ວຍບັນຍາກາດແຫ່ງການເສີມຂະຫຍາຍສິດປະຊາທິປະໄຕ ໃນການປະກອບຄຳຄິດຄຳເຫັນ, ຄຳຊັກຖາມ ແລະ ການຊີ້ແຈງ ຕໍ່ວຽກງານຕ່າງໆທີ່ນຳມາລາຍງານ ແລະ ພິຈາລະນາຮັບຮອງເອົາດ້ວຍຄວາມຮັບຜິດຊອບສູງຂອງອົງການການປົກຄອງແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ)ເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມຈຸດປະສົງແລະຄາດໝາຍທີ່ວາງໄວ້ເປັນຢ່າງດີ.

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ອົງການປົກຄອງແຂວງທີ່ເອົາໃສ່ໃຈຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ໂດຍສະເພາະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ບັນລຸຜົນສຳເລັດຫຼາຍຄາດໝາຍ ເຊິ່ງເຮັດໃຫ້ເສດຖະກິດຂອງແຂວງຂະຫຍາຍຕົວໃນລະດັບ 3.94% ເທົ່າກັບ 64.59% ຂອງແຜນການປີ ຄິດເປັນມູນຄ່າ 11,232 ຕື້ກີບ ເທົ່າກັບ 58% ຂອງແຜນການປີ, ສະເລ່ຍລາຍຮັບຕໍ່ຫົວຄົນບັນລຸ 23 ລ້ານກວ່າກີບ ເທົ່າກັບ 58.01% ຂອງແຜນການປີ; ດ້ານງົບປະມານ ສາມາດເກັບລາຍຮັບໄດ້ 85.82% ຂອງແຜນການປີ ແລະດ້ານລາຍຈ່າຍປະຕິບັດໄດ້ 45.40%ຂອງແຜນການປີ. ສັງລວມແລ້ວການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2025 ມີຫຼາຍຄາດໝາຍໄດ້ຮັບການຈັດຕັ້ງປະຕິບັດບັນລຸຜົນສຳເລັດແຕ່ 20% ຂຶ້ນໄປ ແລະ ມີ 2 ຄາດໝາຍ ປະຕິບັດໄດ້ລື່ນແຜນຄື: ການປູກເຂົ້ານາປີ ແລະ ເຂົ້ານາແຊງ; ບັນຫາໜຶ່ງທີ່ສຳຄັນແມ່ນສາມາດ ເຮັດໃຫ້ທົ່ວແຂວງມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ ແລະ ຢູ່ໃນເກນປົກກະຕິ. ສະແດງຊົມເຊີຍຕໍ່ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ ທີ່ໄດ້ ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນແມ່ນໄດ້ແກ້ໄຂຄຳຮ້ອງທຸກແລະການພິຈາລະນາແກ້ໄຂຄະດີຂອງປະຊາຊົນ. ສະແດງຊົມເຊີຍຕໍ່ຄະນະປະຈຳສະພາປະຊາຊົນແຂວງ ທີ່ສາມາດ ປະຕິບັດໜ້າທີ່ວຽກງານຂອງຕົນບັນລຸຜົນສຳເລັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ດ້ານການສ້າງ ແລະ ປັບປຸງນິຕິກຳຂອງແຂວງ ໃຫ້ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ; ການພິຈາລະນາຕົກລົງຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ; ການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມ ສພຂ ແລະ ການລົງພົບປະຜູ້ມີສິດເລືອກຕັ້ງໄດ້ເປັນຢ່າງດີ.

ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນການຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງໃຫ້ໄດ້ຮັບໝາກຜົນຫຼາຍກວ່າເກົ່າ; ຕິດຕາມກວດກາການເຄື່ອນ ໄຫວວຽກງານຂອງສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງແລະວຽກງານສະພາປະຊາຊົນແຂວງ ໃຫ້ໄດ້ຮັບຜົນການຈັດຕັ້ງປະຕິບັດ ແລະ ເຂົ້າສູ່ຊີວິດຕົວຈິງຫຼາຍຂຶ້ນ; ຜົນສຳເລັດດັ່ງກ່າວ ສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບດ້ານການເມືອງຂອງ ສພຂ, ອົງການປົກຄອງແຂວງ ແລະ ທຸກພາກສ່ວນ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2025 ໃຫ້ປາກົດຜົນເປັນຈິງ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນບັນດາເຜົ່າ.

ປະທານກອງປະຊຸມໄດ້ຮຽກຮ້ອງອົງການປົກຄອງແຂວງ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 6 ແລະ ສສຂ ໃນແຕ່ລະເຂດເລືອກຕັ້ງ ຈົ່ງເພີ່ມທະວີຄວາມຮັບຜິດຊອບໃນການນຳເອົາມະຕິກອງປະຊຸມຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ຢ່າງທົ່ວເຖິງ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ເກີດຜົນປະໂຫຍດຕົວຈິງ, ເຮັດໃຫ້ທຸກຂົງເຂດວຽກງານມີການຫັນປ່ຽນຢ່າງແຂງແຮງ ແລະ ພັດທະນາດີຂຶ້ນຕື່ມອີກກ້າວໜຶ່ງ.



# ສພຂ ຫົວພັນ ເຊື່ອມຊຶມມະຕິສຳຄັນຂອງແຂວງ



(ສພຂ) - ວັນທີ 30 ກໍລະກົດຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຊື່ອມ ຊຶມມະຕິອົງການປົກຄອງແຂວງ ປະຈຳ 6 ເດືອນ ແລະ ທິດທາງແຜນການປະຈຳເດືອນ 7-9 ປີ 2025 ແລະມະຕິກອງປະຊຸມຄົບຄະນະຄັ້ງທີ 18 ສະໄໝທີ X ຂອງຄະນະບໍລິຫານງານພັກແຂວງຫົວພັນ ໂດຍການເຜີຍແຜ່ຂອງສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ,ຮອງປະທານສະພາປະຊາຊົນແຂວງ ແລະ ສະຫາຍ ຄຳຟອງ ກົ້ວມີ ໄຊ ຮອງປະທານສະພາປະຊາຊົນແຂວງ, ມີບັນດາສະຫາຍໃນຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວ ໜ້າຂະແໜງ, ສະມາຊິກພັກແລະພະນັກງານ-ລັດຖະກອນ ພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອເຜີຍແຜ່ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນໄດ້ຮັບຮູ້, ເຂົ້າໃຈເນື້ອໃນດັ່ງກ່າວໂດຍຫັນເປັນແຜນການ, ແຜນງານ, ໂຄງການ, ມີການແບ່ງປັນຄວາມຮັບຜິດຊອບລະອຽດ ພ້ອມທັງຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ ແລະ ກຳແໜ້ນເນື້ອໃນຈິດໃຈມະຕິຢ່າງເລິກເຊິ່ງ ເພື່ອສືບຕໍ່ຍູ້ແຮງ ແລະ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກແລະການຄຸ້ມຄອງບໍລິຫານຂອງລັດ ເຮັດໃຫ້ໂສມໜ້າໃໝ່ຂອງແຂວງຫົວພັນ ມີການປ່ຽນແປງຢ່າງຫຼວງຫຼາຍຮອບດ້ານ ໃນນັ້ນ, ຕ້ອງຍູ້ແຮງການຈັດຕັ້ງຜັນຂະຫຍາຍເຂົ້າສູ່ຊີວິດຕົວຈິງ ໃຫ້ເປັນຂະບວນການຟົດຟື້ນ, ກວ້າງຂວາງ ແລະ ແຂງແຮງຂອງມະຫາຊົນ, ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ, ຮອບດ້ານທາງດ້ານຄວາມຮູ້-ຄວາມສາມາດ, ທັກສະ, ແນວຄິດ ແລະ ການກະທຳ ແນໃສ່ສົ່ງເສີມດ້ານດີ, ແກ້ໄຂຄວາມບົກພ່ອງ, ຂໍ້ຄົງຄ້າງແລະສິ່ງທ້າທາຍຕ່າງໆ ໃຫ້ມີການຫັນປ່ຽນຢ່າງແຂງແຮງ ເລິກເຊິ່ງ ຮອບດ້ານ.

# ສພຂ ບໍລິຄຳໄຊ ຮັບຮອງ 3 ບັນຫາສຳຄັນຂອງແຂວງ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ II ໄດ້ດຳ ເນີນໃນວັນທີ16-17ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາ ຊົນແຂວງ, ມີທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11, ທ່ານ ຄຳແຫວນ ປັນຍານຸວົງ ຮອງເຈົ້າແຂວງບໍລິຄຳໄຊ, ບັນດາທ່ານສສຊ, ສະມາຊິກສະພາປະຊາຊົນແຂວງ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ດ້ວຍຄວາມເປັນເອກະພາບສູງ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງຄື: 1. ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳ 6 ເດືອນຕົ້ນປີ ແລະທິດທາງແຜນການປະຈຳ6ເດືອນທ້າຍປີ2025; 2. ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ຊີວະນານາພັນໃນເຂດອ່າງຮັບນໍ້າໜ້າເຂື່ອນໄຟຟ້ານໍ້າງຽບ 1 ໃນເຂດພື້ນທີ່ແຂວງບໍລິຄຳໄຊ; 3. ບົດລາຍງານການຈັດຕັ້ງປະຕິບັດວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະທິດທາງແຜນການຫາທ້າຍສະໄໝຂອງ ສພຂ. ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງເລກທີ 06/ນຍ ແລະ ຄຳສັ່ງເລກທີ 02/ຂບຊ ວ່າດ້ວຍການຕິດຕາມ, ກວດກາ ແລະ ແກ້ໄຂບັນຫາການຂຸດຄົ້ນແຮ່ຫີນ-ຊາຍ ທີ່ຕິດພັນກັບການຂຸດຄົ້ນແຮ່ຄຳຕົກຂ້ອນຕາມບັນດາສາຍນໍ້າ, ຫ້ວຍຮ່ອງ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆພາຍໃນແຂວງ; ຜົນການສຳມະນາວິທະຍາສາດ ແລະ ການທາບທາມຮ່າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VI ຂອງແຂວງ.

ຜ່ານການຖ່າຍທອດສົດ ແລະ ເປີດສາຍດ່ວນ ໃນໄລຍະດຳເນີນກອງປະຊຸມ, ໄດ້ມີຄຳສະເໜີຂອງປະຊາຊົນ ມາຍັງກອງປະຊຸມ 10 ສາຍ.

**(ລະອອງດາວ)**

# ຍົກສູງຄຸນນະພາບດ້ານເນື້ອໃນ ແລະ ຕິດຕາມກວດກາວຽກງານ ປກຊ-ປກສ




(ສພຂ) - ກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ໄດ້ຈັດຂຶ້ນເມື່ອວັນທີ 14-15 ກໍລະກົດຜ່ານມາ ທີ່ສະໂມ ສອນເມືອງພິນ ໂດຍການເປັນປະທານຂອງທ່ານກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເຊິ່ງມີທ່ານ ບຸນໂຈມ ອຸບົນປະເສີດ ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງສະຫວັນນະເຂດ, ບັນດາທ່ານຄະນະປະຈຳ ສພຂ, ເລຂາຄະນະບໍລິຫານງານພັກເມືອງພິນ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ທີ່ຢູ່ທ້ອງຖິ່ນ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ-ນະຄອນ, ພະແນກການທີ່ກ່ຽວຂ້ອງ, ຮອງເລຂາທິການ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນ ສພຂ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ; ທັງນີ້, ກໍເພື່ອຄົ້ນຄວ້າບັນດາເນື້ອໃນສຳຄັນໃຫ້ມີຄວາມລະອຽດຈະແຈ້ງ ໂດຍສະເພາະການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ກ່ອນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9.

ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ທ້າຍປີ 2025 ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ; ການສ້າງນິຕິກຳໃຕ້ກົດໝາຍ 2 ສະບັບຄື: ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃນສະຖານທີ່ສຶກສາພາຍໃນແຂວງ ແລະ ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງແຜນຜັງນະຄອນໄກສອນພົມວິຫານ ແລະ ເມືອງອຸທຸມພອນ. ຈາກນັ້ນ, ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດເຂົ້າໃນການຄົ້ນຄວ້າຢ່າງເລິກເຊິ່ງ, ຖີ່ຖ້ວນ, ສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງສ້າງສັນ ໂດຍຍົກໃຫ້ເຫັນດ້ວຍຫຼັກການ, ຈະແຈ້ງ ແລະເຂົ້າໃຈງ່າຍເພື່ອຮັບປະກັນຄວາມເປັນເອກະພາບຕໍ່ບັນດາເນື້ອໃນໃຫ້ມີລັກສະນະວິຊາການ ແລະສາມາດຊຸກຍູ້ການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ທັງຍົກສູງດ້ານເນື້ອໃນຕ່າງໆ ໃຫ້ມີຄຸນນະພາບ, ສົມບູນ, ຄົບຖ້ວນ, ຮັດກຸມ, ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນເວົ້າລວມ, ເວົ້າສະເພາະ ຕິດພັນກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມຂອງແຂວງໃນປັດຈຸບັນ.

ຕອນແລງວັນທີ 14 ກໍລະກົດ, ທ່ານ ກົງແກ້ວ ມີວໍລະຈັກ ພ້ອມດ້ວຍຄະນະ ຍັງໄດ້ລົງຕິດຕາມ ແລະ ຊຸກຍູ້ການສ້ອມແປງຕາຝັ່ງເຊໂຈນທີ່ຖືກນ້ຳເຊາະເຈື່ອນຢູ່ເຂດບ້ານພິນ ໂດຍມີເລຂາພັກເມືອງ, ການນຳຂັ້ນເມືອງ ແລະ ພະແນກການທີ່ກ່ຽວຂ້ອງເຂົ້າຮ່ວມຕິດຕາມ. ສຳລັບບໍລິເວນທີ່ຖືກຜົນກະທົບນ້ຳເຊາະເຈື່ອນ ແມ່ນຢູ່ຂອບແຈຂອງຄັນຄູຝາຍນ້ຳລົ້ນເຊໂຈນ, ສາເຫດແມ່ນເກີດຈາກກັນເຈື່ອນທີ່ກໍ່ສ້າງໄລຍະຜ່ານມາ ເປັນເວລາຫຼາຍປີແລ້ວບວກກັບລະດັບນ້ຳຂຶ້ນສູງ ຈຶ່ງເຮັດໃຫ້ມີການເປ່ເພ ເຮັດໃຫ້ນ້ຳໄຫຼເຊາະເຈື່ອນເອົາຕາຝັ່ງລາມເຂົ້າໄປຫາເຮືອນປະຊາຊົນ ເຊິ່ງມີຄວາມຍາວຂອງຕາຝັ່ງທີ່ຖືກເຊາະເຈື່ອນປະມານ 20 ແມັດ; ມາຮອດປັດຈຸບັນ, ການນຳຂອງແຂວງ ແລະ ເມືອງ ໄດ້ເຫັນດີໃຫ້ບໍລິສັດວຽງສີວິໄລກໍ່ສ້າງຂົວທາງ ມາຮັບເໝົາສ້ອມແປງ, ໃຊ້ງົບປະມານ 700 ລ້ານກວ່າກີບ.

ວັນທີ 16 ກໍລະກົດ, ທ່ານ ກົງແກ້ວ ມີວໍລະຈັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ໃນຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ຕິດພັນກັບການຕິດຕາມກວດກາວຽກງານຊາຍແດນ ຢູ່ກອງຮ້ອຍທະຫານຊາຍແດນ 320 ແລະ ຄ້າຍຄຸມຂັງພາກໃຕ້ແກ້ງຄັນ ເມືອງເຊໂປນ ໂດຍມີບັນດາທ່ານ ສສຂ ປະຈຳເຂດເລືອກຕັ້ງເມືອງ, ຄະນະພັກ-ຄະນະບັນຊາ, ນາຍແລະພົນທະຫານ-ຕຳຫຼວດ ເຂົ້າຮ່ວມ.

ຫຼັງຈາກຮັບຟັງລາຍງານສະພາບລວມການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂດຍສັງເຂບຂອງທັງສອງຈຸດ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນ ແລະ ເຈາະຈີ້ມບາງບັນຫາ ເປັນຕົ້ນແມ່ນວຽກງານປ້ອງກັນຊາຍແດນ, ການລັກລອບເຂົ້າ-ອອກເມືອງແບບຜິດກົດໝາຍ, ການລັກລອບຄ້າ-ຂາຍຂອງເຖື່ອນ, ການເຄື່ອນໄຫວສາສະໜາໂດຍບໍ່ໄດ້ຮັບອະນຸຍາດ ແລະ ກົນໄກການປະສານງານລະຫວ່າງກອງຮ້ອຍທະຫານຊາຍແດນກັບພາກສ່ວນທີ່ກ່ຽວຂ້ອງ; ການຄຸ້ມຄອງ ແລະ ຕິດຕາມກວດການັກໂທດທີ່ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດໃນຄະດີອາຍາໃນໄລຍະຜ່ານມາ ແລະ ບັນຫາອື່ນໆ. ທັງນີ້, ກໍເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍແລະຂໍ້ຄົງຄ້າງທີ່ຈະຕ້ອງຊອກຫາວິທີການແກ້ໄຂ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ ແນໃສ່ເຮັດໃຫ້ສອງພາກສ່ວນ ເຄື່ອນໄຫວວຽກງານຂອງຕົນ ນັບມື້ນັບດີຂຶ້ນ.

ທ່ານ ກົງແກ້ວ ມີວໍລະຈັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຂອງສອງພາກສ່ວນ ພ້ອມທັງເນັ້ນໜັກໃຫ້ຄະນະພັກ-ຄະນະບັນຊາເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານເປັນປົກກະຕິ ຄຽງຄູ່ກັບການປະຕິບັດໜ້າທີ່ວິຊາສະເພາະ ໂດຍສອດຄ່ອງກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆ ທີ່ພົວພັນເຖິງວຽກງານ ປກຊ-ປກສ.



## ກອງປະຊຸມ...

(ຕໍ່ຈາກໜ້າ 2)

ອັນມາສດາ ທີ່ນຳໃຊ້ພະລັງງານໃໝ່; ຢ້ຽມຊົມເຂດອະນຸລັກຄວາມຫຼາກຫຼາຍທາງດ້ານຊີວະນານາພັນພື້ນທີ່ຊຸ່ມນ້ຳເປົາເຟີງ, ໂຄງການພື້ນຖານໂຄງລ່າງ ແລະ ການເຊື່ອມຕໍ່ທາງລົດໄຟ (ໂລຈິດສຕິກ) ບ້ານວັງເຈຍອີງແລະໂຄງການຟື້ນຟູຊົນນະບົດບ້ານໄບຈາວ.

ຄະນະຜູ້ແທນລາວ ໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງຫຼາກຫຼາຍ ແລະ ສ້າງສັນ ໂດຍສະເພາະໃນພິທີເປີດ ແລະ ປິດກອງປະຊຸມສຳມະນາ, ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ສະແດງຄວາມຂອບໃຈຕໍ່ເຈົ້າພາບ ສປຈີນ ໃນການຕ້ອນຮັບຢ່າງອົບອຸ່ນ ເຊິ່ງການຈັດກອງປະຊຸມສຳມະນາຄັ້ງນີ້ໄດ້ສ້າງຄວາມຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມ ກ່ຽວກັບລະບົບປະຊາທິປະໄຕແບບຈີນ, ການພັດທະນາປະເທດແບບຍືນຍົງຂອງຈີນ, ການພັດທະນາເຕັກໂນໂລຊີທີ່ທັນສະໄໝ ຄວບຄູ່ກັບການອະນຸລັກຮັກສາວັດທະນະທຳແລະວິຖີການດຳລົງຊີວິດຂອງປະຊາຊົນບັນດາເຜົ່າໃນຈີນ ລວມໄປເຖິງແນວທາງການຮ່ວມມືເພື່ອການພັດທະນາລະຫວ່າງ ຈີນ ກັບ ອາຊຽນ ໃນຕໍ່ໜ້າ ຖານະທີ່ ສປຈີນ ເປັນຄູ່ຮ່ວມມືຍຸດທະສາດຮອບດ້ານກັບອາຊຽນ ໂດຍສະເພາະການຮ່ວມມືພາຍໃຕ້ "ຂໍ້ລິເລີ່ມໜຶ່ງແຖບໜຶ່ງເສັ້ນທາງ"; ພ້ອມດຽວກັນນັ້ນ, ທ່ານໄດ້ຍົກໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການພົວພັນຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງຍາວນານ, ເປັນຄູ່ຮ່ວມຊາຕາກຳລາວ-ຈີນ ພິເສດແມ່ນການຮ່ວມມືພາຍໃຕ້ໂຄງການລົດໄຟ ລາວ-ຈີນ ທີ່ເຊື່ອມຈອດລະຫວ່າງຢຸນນານ ຂອງ ສປຈີນ ກັບ ສປປ ລາວ ຜ່ານໄປຍັງບັນດາປະເທດສະມາຊິກອາຊຽນກໍຄືການເຊື່ອມຈອດຈາກອາຊຽນ ຜ່ານ ສປປ ລາວ ເຖິງ ສປຈີນ ແລະ ໄປສູ່ປະເທດຕ່າງໆ ອັນໄດ້ຫັນປ່ຽນ ສປປລາວ ຈາກປະເທດທີ່ບໍ່ມີທາງອອກສູ່ທະເລ ກາຍເປັນປະເທດເຊື່ອມຈອດ ແລະ ເຊື່ອມໂຍງ. ທ່ານໄດ້ສະເໜີໃຫ້ມີການເພີ່ມທະວີການແລກປ່ຽນສົນທະນາໃນທຸກດ້ານ-ທຸກລະດັບ ລະຫວ່າງ ຈີນ-ອາຊຽນ, ສົ່ງເສີມການຮ່ວມມືຢ່າງໃກ້ຊິດໃນການຮັກສາສັນຕິພາບ, ການພັດທະນາເສດຖະກິດ-ສັງຄົມ, ການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ການໄປມາຫາສູ່ກັນລະຫວ່າງປະຊາຊົນອາຊຽນ ແລະ ປະຊາຊົນຈີນ ໃຫ້ນັບມື້ນັບດີຂຶ້ນ.

ນອກຈາກນັ້ນ, ຫົວໜ້າຄະນະຜູ້ແທນລາວຍັງໄດ້ໃຫ້ສຳພາດຕໍ່ສຳນັກຂ່າວຊິນຮວາ, ສື່ມວນຊົນຂອງສະພາຜູ້ແທນປະຊາຊົນຈີນ ແລະ ສື່ມວນຊົນປະຈຳທ້ອງຖິ່ນຢູ່ແຂວງຈຽງຊູ ແລະ ແຂວງຢຸນນານ ກ່ຽວກັບປະສົບການ ແລະບົດຮຽນທີ່ຖອດຖອນໄດ້ຈາກການເຄື່ອນໄຫວວຽກງານໃນຄັ້ງນີ້ອີກດ້ວຍ.

## ກຳນົດ...

(ຕໍ່ຈາກໜ້າ 1)

ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ທຸກອົງການຈັດຕັ້ງໃນລະບົບການເມືອງປະຊາທິປະໄຕປະຊາຊົນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈົ່ງພ້ອມກັນປະຕິບັດຢ່າງເຂັ້ມງວດ ແລະ ເປັນເອກະພາບສູງໃນການຂຽນບ່ອນອີງຂອງທຸກເອກະສານທາງລັດຖະການ ໃຫ້ຂຽນມາດຕາຂອງກົດໝາຍຂຶ້ນກ່ອນ ແລ້ວຈຶ່ງຂຽນຊື່ກົດໝາຍຕາມຫຼັງ, ບໍ່ຈຳເປັນຂຽນພາກ ແລະ ໝວດ ທັງສະເໜີໃຫ້ລັດຖະບານ ຊີ້ນຳພາກສ່ວນທີ່ກ່ຽວຂ້ອງ ປັບປຸງຄຳແນະນຳສະບັບເລກທີ 02/ພນ, ລົງວັນທີ 9 ມີນາ 2021 ຂອງກະຊວງພາຍໃນເກົ່າ ໃຫ້ສອດຄ່ອງຕາມມະຕິສະບັບເລກທີ 197/ຄປຈ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ເຫັນດີໃຫ້ປ່ຽນສີເຄື່ອງໝາຍຊາດຈາກສີຄຳເປັນສີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 114 ຂອງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2025 ທັງເຫັນດີໃຫ້ປັບຍອດໃບໄມ້ຢູ່ໃນເຄື່ອງໝາຍຊາດອອກໜ້ອຍໜຶ່ງ ເພື່ອບໍ່ໃຫ້ບັງຮູບທາດຫຼວງ, ພ້ອມນັ້ນ ຍັງເຫັນດີກຳນົດເອົາວັນທີ 4 ສິງຫາ 1978 ເປັນວັນສ້າງຕັ້ງສະພາປະຊາຊົນທ້ອງຖິ່ນ ຫຼື ສະພາປະຊາຊົນຂັ້ນແຂວງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຍັງໄດ້ແນະນຳກ່ຽວກັບການປາຖະກະຖາກ່ຽວກັບວັນລັດຖະທຳມະນູນແຫ່ງຊາດຄົບຮອບ 34 ປີ ໂດຍໃຫ້ດຳເນີນໄປຕິດພັນກັບການໂຄສະນາເຜີຍແຜ່ຜົນການປັບປຸງເນື້ອໃນລັດຖະທຳມະນູນສະບັບປີ 2025 ແນໃສ່ເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ກະສິກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການທັງພາກລັດ ແລະ ເອກະຊົນ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດ, ຊາວຕ່າງປະເທດທີ່ມາລົງທຶນຢູ່ ສປປລາວ, ປະຊາຊົນລາວບັນດາເຜົ່າ ແລະ ທຸກອົງການຈັດຕັ້ງໃນລະບົບການເມືອງປະຊາທິປະໄຕປະຊາຊົນ ກໍຄືພີ່ນ້ອງຊາວລາວຢູ່ຕ່າງປະເທດ ໄດ້ຮັບຮູ້ຢ່າງທົ່ວເຖິງກັນ ເພື່ອພ້ອມກັນຍົກສູງສະຕິເຄົາລົບ ແລະປະຕິບັດລັດຖະທຳມະນູນ, ເພີ່ມທະວີຄວາມສາມັກຄີເປັນອັນໜຶ່ງອັນດຽວ ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດກ້າວຂຶ້ນສູ່ຄວາມວັດທະນະຖາວອນ ເຊິ່ງມີເນື້ອໃນສຳຄັນຂອງຄຳແນະນຳຄື: 1) ຄວາມສຳຄັນຂອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 34 ປີ ໃນນີ້, ໃຫ້ເຂົ້າໃຈຢ່າງຖືກຕ້ອງຕໍ່ຄວາມໝາຍຂອງວັນລັດຖະທຳມະນູນແຫ່ງຊາດເຊິ່ງແມ່ນການກຳນົດເອົາວັນປະກາດໃຊ້ລັດຖະທຳມະນູນ ແຫ່ງ ສປປລາວ ສະບັບທຳອິດ ໃນວັນທີ 15 ສິງຫາ 1991 ເປັນວັນລັດຖະທຳມະນູນແຫ່ງຊາດ ເພື່ອໃຫ້ພົນລະເມືອງໝົດທຸກຄົນແລະທຸກອົງການຈັດຕັ້ງຢູ່ ສປປລາວ ເຫັນໄດ້ຜົນງານ, ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນໃນການຈັດຕັ້ງປະຕິບັດລັດຖະທຳມະນູນຕະຫຼອດໄລຍະ 34 ປີທີ່ຜ່ານມາ ແລະ ທິດທາງເພື່ອແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງໃນຕໍ່ໜ້າ ທັງສ້າງເຂົ້າໃຈຖືກຕ້ອງຕໍ່ເນື້ອໃນລັດຖະທຳມະນູນສະບັບປີ 2025 ເພື່ອພ້ອມກັນຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ເປັນຕົ້ນການປະຕິບັດສິດ ແລະ ພັນທະຂອງພົນລະເມືອງໃຫ້ໄດ້ຢ່າງຄົບຖ້ວນ.





## ສະຫຼຸບ...

(ຕໍ່ຈາກໜ້າ 1)

ແລະ ບັນດາສະຫາຍໃນຄະນະປ້ອງກັນພາຍໃນ ແລະ ໜ່ວຍປ້ອງກັນຕົວ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອກວດກາ, ຕີລາຄາຄືນການເຄື່ອນໄຫວວຽກງານປ້ອງກັນພາຍໃນແລະການປ້ອງກັນຕົວ ຂອງສະພາແຫ່ງຊາດ ໃນ 6 ເດືອນຜ່ານມາ ທັງຖອດຖອນໄວ້ເປັນບົດຮຽນ ແລະ ຄົ້ນຄວ້າກຳນົດທິດທາງວຽກງານຈຸດສຸມໃນ 6 ເດືອນທ້າຍປີ 2025; ຮັບປະກັນທາງດ້ານຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະປອດໄພ ຂອງສຳນັກງານ-ຫ້ອງການ ລວມທັງສະພາບທາງດ້ານແນວຄິດ, ການເຄື່ອນໄຫວຂອງສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນ ສພຊ ແລະ ເພື່ອປັບປຸງ, ຍົກລະດັບວຽກງານດັ່ງກ່າວ ໃຫ້ມີປະສິດທິພາບແລະປະສິດທິຜົນສູງຂຶ້ນເທື່ອລະກ້າວ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳ 6 ເດືອນຕົ້ນປີ ແລະ ວາງທິດທາງແຜນການ 6 ເດືອນທ້າຍປີ 2025ຂອງຄະນະປ້ອງກັນພາຍໃນ ແລະການປ້ອງກັນຕົວ ຂອງສະພາແຫ່ງຊາດ; ຈາກນັ້ນ, ຫົວໜ້າກົມໃຫຍ່ສັນຕິບານ ໄດ້ມີຄຳເຫັນຕໍ່ບົດສະຫຼຸບດັ່ງກ່າວແລະມີການແລກປ່ຽນຄຳຄິດຄຳເຫັນກ່ຽວກັບການເຄື່ອນໄຫວວຽກງານປ້ອງກັນພາຍໃນ ແລະປ້ອງກັນຕົວ ຂອງແຕ່ລະໜ່ວຍພັກພາຍໃນ ສພຊ.

ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ທັງເນັ້ນໜັກໃຫ້ເພີ່ມທະວີຄວາມສາມາດໃນການເປັນເສນາທິການໃຫ້ແກ່ຄະນະພັກຂັ້ນຂອງຕົນ ໃນການສຶກສາອົບຮົມການເມືອງ-ແນວຄິດ, ຖືວຽກງານດັ່ງກ່າວເປັນບັນຫາສຳຄັນ ເພື່ອຕ້ານຢັນຕໍ່ກົນອຸບາຍ, ເລ່ຫຼ່ຽມ ຂອງອິດທິກຳລັງປໍລະປັກ ທີ່ຫວັງມ້າງເພ, ທຳລາຍ ລະບອບຂອງພວກເຮົາ ໂດຍສວຍໃຊ້ປາກົດການ "ຫັນປ່ຽນດ້ວຍຕົນເອງ", "ເສື່ອມຄຸນປ່ຽນທາດເອງ" ຂອງຖັນແຖວພະນັກງານ, ສະມາຊິກພັກ; ຕ້ອງກວດກາ ແລະປະເມີນຄືນວ່າອັນໃດຄວນເສີມຂະຫຍາຍ ຫຼື ເນັ້ນໜັກຂຶ້ນຕື່ມ, ອັນໃດຕ້ອງໄດ້ປັບປຸງແລະແກ້ໄຂຢ່າງເດັດຂາດ ໄປຄຽງຄູ່ກັບການຮັກສາ ແລະ ເສີມຂະຫຍາຍມູນເຊື້ອຄວາມສາມັກຄີເປັນເອກະພາບກັນພາຍໃນໃຫ້ແໜ້ນແຟ້ນ; ເອົາໃຈໃສ່ຕິດຕາມກວດກາກຳແໜ້ນສະພາບການຮອບດ້ານຢູ່ພາຍໃນໜ່ວຍພັກ ກໍຄືການຈັດຕັ້ງຂອງຕົນ, ກຳໃຫ້ໄດ້ທັດສະນະທ່າອຽງທາງດ້ານການເມືອງ-ແນວຄິດ ແລະ ສະພາບການເຄື່ອນໄຫວຂອງພະນັກງານ, ສະມາຊິກພັກ ໃນແຕ່ລະໄລຍະຢ່າງປົກກະຕິ, ຕໍ່ເນື່ອງ ໂດຍຖືເອົາວຽກງານປ້ອງກັນ, ສະກັດກັ້ນແຕ່ຫົວທີ ເປັນກົກ ແລະເອົາການແກ້ໄຂບັນຫາກັບທີ່ ເປັນອັນສຳຄັນ, ຖ້າເກີດມີຢູ່ບ່ອນໃດ ມອບໃຫ້ການຈັດຕັ້ງບ່ອນນັ້ນເປັນເຈົ້າການແກ້ໄຂຢ່າງຂາດຕົວ ຮັບປະກັນຄວາມຖືກຕ້ອງ, ຍຸຕິທຳ ແລະທັນການ ບໍ່ປ່ອຍປະໃຫ້ແຜ່ລາມ ແລະ ສິ່ງຜົນກະທົບເປັນວົງກວ້າງ; ເພີ່ມທະວີການຕິດຕາມເລ່ຫຼ່ຽມ, ກົນອຸບາຍຂອງອິດທິກຳລັງປໍລະປັກ ແລະຄົນບໍ່ດີທີ່ຫວັງມ້າງເພ, ທຳລາຍພວກເຮົາ ພ້ອມທັງມີວິທີການສະກັດກັ້ນ ແລະ ຕ້ານຄືນກັບກົນອຸບາຍດັ່ງກ່າວຂອງສັດຕູໃຫ້ໄດ້ຢ່າງຂາດຕົວ; ຄົ້ນຄວ້າວາງແຜນການ, ສ້າງ ແລະ ປັບປຸງລະບຽບການເພື່ອປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ປອດໄພພາຍໃນສຳນັກງານແລະລະບຽບການຄຸ້ມຄອງການເຄື່ອນໄຫວຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ຢູ່ໃນການຄຸ້ມຄອງຂອງຕົນເພື່ອຮັບປະກັນໃຫ້ໄດ້ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພຢູ່ພາຍໃນອົງການຂອງພວກເຮົາ; ສືບຕໍ່ເປັນເສນາທິການໃຫ້ແກ່ຄະນະບໍລິຫານງານພັກສະພາແຫ່ງຊາດ ໃນການພົວພັນປະສານສົມທົບກັບກົມປ້ອງກັນພາຍໃນ, ກົມໃຫຍ່ສັນຕິບານ, ກອງບັນຊາການປ້ອງກັນສູນກາງໃຫ້ມີຄວາມກົມກຽວ ແລະ ໂລ່ງລ່ຽນ; ຄົ້ນຄວ້າປັບປຸງນິຕິກຳ, ລະບອບການພົວພັນປະສານງານໃຫ້ເປັນລະບົບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານນີ້ ໃຫ້ມີປະສິດທິຜົນດີຂຶ້ນເທື່ອລະກ້າວ. ພ້ອມກັນນັ້ນ, ສະຫາຍຍັງຮຽກຮ້ອງໃຫ້ເພີ່ມທະວີຄວາມສາມັກຄີເປັນເອກະພາບ; ເຊີດຊູນ້ຳໃຈເປັນເຈົ້າຕົນເອງ, ກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ເຕົ້າໂຮມທຸກກຳລັງແຮງສັງລວມ ສຸມໃສ່ການຈັດຕັ້ງປະຕິບັດໜ້າທີ່ອັນມີກຽດສະຫງ່ານີ້ ໃຫ້ມີຜົນສຳເລັດຢ່າງແຂງແຮງ; ເປັນເຈົ້າການແຕ່ຫົວທີ ໃນການປ້ອງກັນຕົວເອງ, ປ້ອງກັນພັກ, ປ້ອງກັນພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.

**(ນາງ ອາລິນ ສຸພົມມະປະກິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ຊາຊົນແຂວງ (ສພຂ) ແລະ ບັນດາສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ-ນະຄອນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ແລະສພຂ ສະຫວັນນະເຂດ ຊຸດທີ II ຢູ່ 3 ເມືອງຄື: ເມືອງພະລານໄຊໂດຍລົງໄປເຂດກຸ່ມບ້ານດົງບັງ ແລະ ສຳນັກງານປົກຄອງເມືອງ, ເມືອງໄຊບູລີ ລົງໄປພົບປະປະຊາຊົນທີ່ເຂດກຸ່ມບ້ານຍາງຄຳ ແລະ ສຳນັກງານປົກຄອງເມືອງ ແລະ ນະຄອນໄກສອນພົມວິຫານ ໂດຍລົງພົບປະຜູ້ມີສິດເລືອກຕັ້ງຢູ່ສຳນັກງານປົກຄອງນະຄອນແລະເຂດກຸ່ມບ້ານສົມສະອາດ ເຊິ່ງມີສະຫາຍເລຂາພັກນະຄອນ, ບັນດາຄະນະປະຈຳພັກ, ການນຳຂອງອຳນາດການປົກຄອງເມືອງ ແລະ ພະແນກການທີ່ກ່ຽວຂ້ອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ ແລະ ສອງກອງບັນຊາການທະຫານ-ຕຳຫຼວດອ້ອມຂ້າງເມືອງ-ນະຄອນ, ເລຂາພັກບ້ານ, ນາຍບ້ານ, ພະນັກງານ-ລັດຖະກອນ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍຫຍໍ້ ເຊິ່ງໄດ້ແຈ້ງຜົນການພິຈາລະນາບັນຫາສຳຄັນພື້ນຖານຂອງຊາດ ດ້ວຍການຮັບຮອງອອກເປັນມະຕິ 15 ສະບັບ ໃນນັ້ນ, ມີການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ ໃນນີ້, ສ້າງໃໝ່ 5 ສະບັບ ແລະ ປັບປຸງ 5 ສະບັບ, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາ ເທື່ອທີ 9 ແລະທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ແລະວຽກງານອື່ນໆຂອງລັດຖະບານ; ຈາກນັ້ນ, ສສຂ ປະຈຳເຂດເລືອກຕັ້ງເມືອງທັງ 2 ເມືອງ ແລະນະຄອນໄກສອນພົມວິຫານ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ສະຫວັນນະເຂດ ຊຸດທີ II ເຊິ່ງໄດ້ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ເປັນຕົ້ນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025, ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍສ້າງໃໝ່ 3 ສະບັບຄື: ຂໍ້ຕົກລົງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນສະຖານທີ່ສຶກສາທົ່ວແຂວງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຜນຜັງນະຄອນໄກສອນພົມວິຫານ ແລະຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຜນຜັງເມືອງອຸທຸມພອນ.

ພາຍຫຼັງຮັບຟັງການເຜີຍແຜ່ແລ້ວ, ບັນດາຜູ້ມີສິດເລືອກຕັ້ງໄດ້ສະເໜີຂໍ້ຂ້ອງໃຈ ເພື່ອເປັນການແລກປ່ຽນບັນຫາຕ່າງໆ ທີ່ຕິດພັນກັບການດຳລົງຊີວິດທີ່ຍັງພົບຄວາມຫຍຸ້ງຍາກ ໂດຍສະເໜີໃຫ້ຂັ້ນເທິງແກ້ໄຂຊ່ວຍເປັນຕົ້ນ: ເສັ້ນທາງຄົມມະນາຄົມເປ່ເພ, ໂຮງຮຽນຊຸດໂຊມ, ການປະລະການຮຽນ, ບັນຫາຢາເສບຕິດ, ການຂາດແຄນນ້ຳ, ໄຟຟ້າບໍ່ມີຄວາມສະຖຽນ (ໄຟຟ້າຕົກ), ລາຄາໄຟຟ້າແພງ ແລະບັນຫາອື່ນໆ.

ໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ຍັງມີຄຳເຫັນໂອ້ລົມ ເຊິ່ງໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມຂອງເມືອງພະລານໄຊ, ເມືອງໄຊບູລີ ແລະ ນະຄອນໄກສອນພົມວິຫານ ທີ່ຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງຊົມເຊີຍຕໍ່ການປະກອບສ່ວນຢ່າງຫ້າວຫັນ ແລະ ມີສ່ວນຮ່ວມຂອງພໍ່ແມ່ປະຊາຊົນ ໃນການບຸກບືນສ້າງວຽກເຮັດງານທຳເພີ່ມລາຍຮັບແກ່ຄອບຄົວ ທັງມີການປະກອບສ່ວນໃນການພັດທະນາທ້ອງຖິ່ນຂອງຕົນຢ່າງຫ້າວຫັນ; ພ້ອມກັນນັ້ນ, ຍັງໄດ້ເນັ້ນໜັກໃຫ້ປະຊາຊົນ ກໍຄືອຳນາດການປົກຄອງແຕ່ລະຂັ້ນ ຈົ່ງສືບຕໍ່ຄົ້ນຄວ້າທ່າແຮງຂອງທ້ອງຖິ່ນຕົນ ເພື່ອເປັນຈຸດສຸມໃນການພັດທະນາທ້ອງຖິ່ນໃຫ້ນັບມື້ນັບເຂັ້ມແຂງ.

ຕໍ່ກັບຂໍ້ສະເໜີຂອງຜູ້ມີສິດເລືອກຕັ້ງນັ້ນ ກໍໄດ້ມີການຊີ້ແຈງຢ່າງກົງໄປກົງມາ ໂດຍການນຳຂອງເມືອງ, ສະພາປະຊາຊົນແຂວງ ແລະ ສະພາແຫ່ງຊາດ ແລະຮຽກຮ້ອງໃຫ້ບັນດາເມືອງ, ບ້ານຕ່າງໆ ພ້ອມດ້ວຍປະຊາຊົນ ຈົ່ງມີສ່ວນຮ່ວມໃນການພັດທະນາ ເພື່ອສົ່ງເສີມ ແລະ ຂະຫຍາຍທ່າແຮງທີ່ມີຂອງເມືອງ-ນະຄອນ ປະກອບສ່ວນເຮັດໃຫ້ແຂວງສະຫວັນນະເຂດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ.

ໃນການເຄື່ອນໄຫວຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ນຳອຸປະກອນການຮຽນ ປະກອບມີ: ເສື້ອນັກຮຽນ, ປຶ້ມຂຽນ, ບິກ, ສໍດຳ ແລະ ອຸປະກອນກິລາຈຳນວນໜຶ່ງ ລວມມູນຄ່າຫຼາຍກວ່າ 40 ລ້ານກີບ ໂດຍສົມທົບກັບການປະກອບສ່ວນຂອງບັນດາບໍລິສັດຢູ່ທ້ອງຖິ່ນ ມອບໃຫ້ບັນດາກຸ່ມບ້ານຂອງ 2 ເມືອງ, ໂຮງຮຽນ SOS, ສະມາຄົມແສງສະຫວ່າງຊ່ວຍເຫຼືອເດັກ ແລະ ແມ່ຍິງ ແລະ ໂຮງຮຽນຊົນເຜົ່າ ເພື່ອນຳໄປແຈກຢາຍໃຫ້ນ້ອງນັກຮຽນຢູ່ບັນດາໂຮງຮຽນດັ່ງກ່າວ. ພ້ອມກັນນັ້ນ, ຄະນະຍັງໄດ້ຕາງໜ້າໃຫ້ສະພາແຫ່ງຊາດ ແລະສະພາປະຊາຊົນແຂວງ ມອບເງິນສົມທົບມູນຄ່າ 200 ລ້ານກີບ ທີ່ໄດ້ຮັບການອຸປະຖຳຈາກບໍລິສັດ ທ່າບົກທ່ານາແລ້ງ ເພື່ອສ້າງໂຮງຮຽນປະຖົມຢູ່ບ້ານສາມັກຄີໄຊ, ເມືອງອາດສະພັງທອງອີກດ້ວຍ.

**(ນາງ ສຸພາວັນ ທອມສະນິດ)**






# ເນື້ອໃນຍັງຄືງເປັນໝາກຫົວໃຈຂອງສື່

# ທິດດີ

ພໍຮອດວັນທີ 13 ສິງຫາ ໃນທຸກປີ, ວົງການສື່ມວນຊົນພວກເຮົາກໍຕ້ອງມີການສະຫຼອງ ເພາະມັນແມ່ນວັນກຳເນີດສື່ມວນຊົນລາວບໍ່? ເຊິ່ງປີນີ້ຄົບຮອບ 75 ປີ.

ໃນຖານະຜູ້ຖຸກຄືໃນວົງການນີ້ມາຕະຫຼອດ 40 ປີ ກໍເຫັນວ່າວົງການເຮົາເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ບໍ່ວ່າທາງດ້ານເຕັກໂນໂລຊີ ກໍຄືເນື້ອໃນ... ໂດຍສະເພາະໃນຍຸກປັດຈຸບັນ ເຕັກໂນໂລຊີປ່ຽນແປງໄວຫຼາຍ, AI ເຂົ້າມາມີບົດບາດປ່ຽນແທນຫຼາຍສິ່ງຢ່າງໃນວົງການພວກເຮົາ... ເຖິງຢ່າງໃດກໍດີ, ວຽກເນື້ອໃນຍັງຄືງເປັນໝາກຫົວໃຈສຳຄັນຂອງສື່ພວກເຮົາ... ມີເຕັກໂນໂລຊີສູງປານໃດ ຫາກບໍ່ມີຜູ້ເຮັດເນື້ອໃນປ້ອນເຂົ້າ ກໍເປັນໄປບໍ່ໄດ້... ເຫັນບໍ່? ຜ່ານມາພວກເຮົາເປີດເວັບໄຊ, ໜ້າເຟສ ແຕ່ສຸດທ້າຍກໍມາຄາເນື້ອໃນປ້ອນເຂົ້າ. ເວົ້າເຖິງເນື້ອໃນ ເນື້ອແທ້ມັນກໍແມ່ນນັກຂ່າວແມ່ນຜູ້ຂຽນນັ້ນເອງ;ວຽກນີ້ຕ້ອງຍອມຮັບວ່າຜູ້ຂຽນໃນລະດັບວິເຄາະ, ວິຈານບັນຫາທັງພາຍໃນ ແລະ ຕ່າງປະເທດ ຂາດເຂີນ... ບໍ່ທໍ່ນັ້ນ, ຜູ້ປຸງແຕ່ງເນື້ອໃນທີ່ຈະກະຈາຍສື່ອອກສູ່ສັງຄົມນັ້ນ(ບັນນາທິການ)ກໍພົບບັນຫາເຊັ່ນກັນ.

ເມື່ອເປັນເຊັ່ນນີ້ ກໍເລີຍມີຜູ້ຕັ້ງບັນຫາວ່າ ວຽກບັນນາທິການ ທີ່ປຽບເໝືອນພໍ່ຄົວໃຫຍ່ທີ່ປຸງແຕ່ງອາຫານໃຫ້ແຊບຊ້ອຍຮັບໃຊ້ຜູ້ບໍລິໂພກນັ້ນ ຕ້ອງມີມາດຕະຖານຫຍັງແດ່? ເຊິ່ງບັນຫານີ້ຄວນຕັ້ງເປັນໂຈດປຶກສາຫາລືຊອກທາງອອກ, ຄັນວ່າມີກອງປະຊຸມວິທະຍາສາດສາຍວິຊາການ ກໍຄວນເອົາບັ້ນຫານີ້ມາແລກປ່ຽນສົນທະນາກັນຄັກແນ່ບໍ່? ເພາະວ່າອາຍຸກໍແກ່ພໍສົມຄວນແລ້ວ ປີນີ້ຄົບຮອບ 75 ປີພໍດີ.

ໃນກົດໝາຍວ່າດ້ວຍສື່ມວນຊົນ (ສະບັບປັບປຸງ) ເລກທີ 019/ສພຊ, ລົງວັນທີ 4/11/2016 ໃນມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ, ໄດ້ອະທິບາຍວ່າ:ບັນນາທິການໝາຍເຖິງຜູ້ກວດແກ້,ກວດຜ່ານເນື້ອໃນແລະຮູບແບບຂອງບົດ, ຂ່າວ ແລະ ລາຍການຂອງສື່ມວນຊົນຕ່າງໆ... ຜ່ານການຮຽນຮູ້ດ້ວຍຕົນເອງ, ການເຝິກອົບຮົມຈາກປະເທດເພື່ອນມິດຍຸດທະສາດ, ຈາກປະສົບການຕົວຈິງທີ່ເຮັດວຽກງານໃນວົງການສື່ ມາຮອດປັດຈຸບັນກໍພໍດີ 40 ປີ; ຜູ້ຂຽນເຫັນວ່າໃນວຽກງານບັນນາທິການ ມີບາງຈຸດສຳຄັນທີ່ຕ້ອງເອົາໃຈໃສ່ດັ່ງນີ້:

1. ບັນນາທິການ ຕ້ອງເຂົ້າໃຈຜູ້ອ່ານ ຜ່ານມາພວກເຮົາຍັງບໍ່ທັນຮັບຮູ້ຜະລິດຕະພັນສື່ມວນຊົນແມ່ນສິນຄ້າ,ແຕ່ໃນເວລາພວກເຮົາດຳເນີນກົນໄກຕະຫຼາດນັ້ນ ມັນມີຄວາມຈຳເປັນຕ້ອງຖືວ່າມັນເປັນສິນຄ້າ... ເພາະວ່າສື່ມວນຊົນຈະເປັນພາລະໃຫ້ງົບປະມານຂອງລັດແບກຫາບຕໍ່ໄປບໍ່ໄດ້ ຕ້ອງກ້າວສູ່ກຸ້ມຕົນເອງສ້າງລາຍຮັບດ້ວຍຕົນເອງ... ຢາກເຮັດໄດ້ແນວນັ້ນ, ຜະລິດຕະພັນຕ້ອງເໝາະສົມກັບຄວາມຮຽກຮ້ອງຕ້ອງການຂອງຜູ້ອ່ານ.

2. ນັກບັນນາທິການ ເປັນຜູ້ມີບົດບາດສຳຄັນເພາະເປັນຜູ້ຕັດສິນເນື້ອໃນທັງໝົດຂອງສື່ມວນຊົນ ກ່ອນທີ່ຈະເຂົ້າໂຮງພິມ, ກະຈາຍສຽງ ຫຼື ກະຈາຍພາບ; ຜູ້ອ່ານແມ່ນຜູ້ບໍລິໂພກສື່. ສະນັ້ນ, ນັກບັນນາທິການ ຕ້ອງກຳໄດ້ວ່າຜູ້ບໍລິໂພກສື່ຂອງຕົນແມ່ນໃຜ? ຜູ້ບໍລິໂພກຕົ້ນຕໍ (ເປົ້າໝາຍ) ແລະ ຜູ້ບໍລິໂພກທາງອ້ອມ; ເວົ້າໃຫ້ເຂົ້າໃຈງ່າຍໆ ກໍແມ່ນວ່ານັກບັນນາທິການ ຕ້ອງເປັນການຕະຫຼາດ ເພາະວ່າໃນຍຸກຂໍ້ມູນ-ຂ່າວສານ ການແຂ່ງຂັນກັນໃນວົງການສື່ມວນຊົນກໍຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງກົດໝາຍວ່າດ້ວຍສື່ມວນຊົນ.

3. ກຳແໜ້ນແຫຼ່ງຂ່າວແມ່ນຫຍັງ? ນັກບັນນາທິການຕ້ອງຮູ້ວ່າແຫຼ່ງຂ່າວທີ່ນັກຂ່າວນຳມາຂຽນນັ້ນມາຈາກໃສ? ມີຄວາມຊັດເຈນບໍ່? ຕົວຢ່າງ: ນັກຂ່າວຂຽນເລື່ອງການຜະລິດນາແຊງ... ຜູ້ເປັນບັນນາທິການ ກໍຕ້ອງມີເພື່ອນຮ່ວມງານຈາກກະຊວງກະສິກຳ-ປ່າໄມ້ ເປັນຜູ້ສະໜອງແຫຼ່ງຂໍ້ມູນທີ່ຊັດເຈນໃຫ້ໝາຍຄວາມວ່າ ນັກບັນນາທິການ ຕ້ອງເປັນຜູ້ຮອບຮູ້, ມີເພື່ອນຮ່ວມງານກວ້າງຂວາງ ຮູ້ທັງນັກວິຊາການ,ຮູ້ທັງນັກການເມືອງ,ຮູ້ທັງນັກທຸລະກິດ, ຮູ້ໃນວົງການສິລະປະບັນເທີງ...

4. ສິ່ງຕັດສິນແມ່ນນັກບັນນາທິການຕ້ອງກຳແໜ້ນແນວທາງນະໂຍບາຍຂອງພັກ-ລັດ, ຮູ້ກົດໝາຍລະບຽບການທີ່ກ່ຽວຂ້ອງໃນບັນຫາຕ່າງໆຢ່າງຊັດເຈນ ລວມໄປເຖິງນະໂຍບາຍການຕ່າງປະເທດ ເພາະມັນຊ່ວຍໃຫ້ການອອກຂ່າວ ຫຼື ສະແດງທັດສະນະຕໍ່ບັນຫາສາກົນທີ່ເກີດຂຶ້ນໃນໂລກ ໄດ້ຢ່າງຖືກຕ້ອງເໝາະສົມ.

5. ການໃຊ້ສຳນວນພາສາຄ່ອງແຄ້ວແມ່ນເຮັດແນວໃດ? ພວກເຮົາຕ່າງກໍຮູ້ດີວ່າວຽກບັນນາທິການ ແມ່ນຂະບວນການນຳເອົາແນວຄິດ, ຈຸດປະສົງດ້ານການເມືອງ, ວັດທະນະທຳ, ວິທະຍາສາດ ທີ່ມີລັກສະນະສ່ວນຕົວຂອງຜູ້ຂຽນ ມາຮັບໃຊ້ຜົນປະໂຫຍດສ່ວນລວມ; ສະນັ້ນ, ການໃຊ້ພາສາ ຫຼື ສຳນວນວັນນະຄະດີ ແມ່ນສຸດທີ່ສຳຄັນ ເພາະມັນຊ່ວຍໃຫ້ຜູ້ອ່ານຊື່ນຊົມ, ພໍອົກພໍໃຈ, ບໍ່ເຄັ່ງຕຶງເວລາອ່ານຂ່າວ ຫຼື ບົດດັ່ງກ່າວ.

ນັກບັນນາທິການທີ່ດີທີ່ເກັ່ງ ຈະຮູ້ນຳໃຊ້ຄຳສຸພາສິດ, ຄຳພັງເພີຍ, ຄຳໂຕງໂຕຍ, ຄຳເວົ້າຂອງທ່ານຜູ້ນຳ ມາປຽບທຽບ, ມາບັນຈຸເຂົ້າໃນປະໂຫຍກ ເພື່ອໃຫ້ບົດ-ຂ່າວນັ້ນ ຄົມແຫຼມ ແລະ ດຶງດູດຜູ້ອ່ານ.

ຢາກສະຫຼຸບວ່າ ນັກບັນນາທິການ ຕ້ອງແມ່ນຜູ້ຮູ້ວຽກກ່ຽວກັບຜູ້ບໍລິໂພກສື່ມວນຊົນ ເຊິ່ງໃນປຶ້ມ"PR ພາຫະນະສົ່ງເສີມສື່ມວນຊົນ" ຂຽນໂດຍ ຣສ. ດຣ. ໂດ ທິ ຖູ ຮັງ ສະຖາບັນສື່ມວນຊົນ ແລະ ໂຄສະນາ ຂອງ ສສ.ຫວຽດນາມ, ພາສາຫວຽດນາມ ພິມປີ 2010 ໄດ້ເວົ້າເຖິງຂົງເຂດພື້ນຖານ PR ຂອງສື່ມວນຊົນໄວ້ບາງຈຸດດັ່ງນີ້: ຕ້ອງຊອກຮູ້ຜູ້ບໍລິໂພກ, ຕ້ອງຮູ້ວາງແຜນ, ສ້າງລາຍການ, ຈັດຕັ້ງປະຕິບັດ, ຮູ້ຄຸ້ມຄອງວຽກງານສື່ຢູ່ພາຍໃນແລະພາຍນອກ, ສ້າງຫໍສະໝຸດ, ສ້າງຫ້ອງເກັບກຳຂໍ້ມູນ, ພົວພັນຮ່ວມມືໃນວົງການສື່ມວນຊົນ ແລະ ຖັນແຖວນັກຂີດ-ນັກຂຽນ, ເປັນທີ່ປຶກສາໃນຍຸດທະສາດໃດໜຶ່ງຂອງວຽກງານສື່, ຮູ້ຄຸ້ມຄອງທີ່ຕັ້ງພາລະບົດບາດຂອງຕົນ ແລະ ຮູ້ຮັກສາບົດບາດຊື່ສຽງສື່ຂອງຕົນ, ຄຸ້ມຄອງບໍ່ໃຫ້ເກີດພາວະວິກິດການແກ່ສື່ຂອງຕົນ.

(ໝາຍເຫດ: PR Public Relation ຂໍອະນຸຍາດແປວ່າຜູ້ບໍລິໂພກສື່ມວນຊົນແທນທີ່ຈະແປວ່າ ຜູ້ເຮັດວຽກປະຊາສຳພັນ).

ສະເໜີແລກປ່ຽນ!



## ຂະບວນການ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນເຊົ້າວັນທີ10ສິງຫານີ້ທີ່ເດີ່ນທາດຫຼວງໜ້າສະພາແຫ່ງຊາດ ໄດ້ມີກິດຈະກຳຂະບວນແຂ່ງຂັນກິລາແລ່ນມິນິມາລາທອນ (Mini Marathon) 10 ກິໂລແມັດແລະແລ່ນເພື່ອສຸຂະພາບ 5 ກິໂລແມັດ ເພື່ອສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 34 ປີ(15/8/1991-15/8/2025) ແລະ ລະດົມທຶນຊ່ວຍເຫຼືອຜູ້ປະສົບອຸທົກກະໄພຈາກພາຍຸວິພາ ໂດຍມີບັນດາການນຳຈາກສະພາແຫ່ງຊາດ, ກະຊວງ, ອົງການ, ທູດຕານຸທູດ ແລະ ອົງການຈັດຕັ້ງສາກົນປະຈຳສປປລາວພ້ອມດ້ວຍມວນຊົນພາຍໃນນະຄອນຫຼວງວຽງຈັນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີເປີດ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດກ່າວວ່າ: ການປະກາດໃຊ້ລັດຖະທຳມະນູນແຫ່ງ ສປປລາວ ເປັນຂີດໝາຍປະຫວັດສາດທີ່ສຳຄັນໃນການຫັນປ່ຽນຈາກການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ ໄປສູ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ທັງເປັນຂີດໝາຍໃນການເຕີບໃຫຍ່ຂະຫຍາຍຕົວຂອງລັດ ສູ່ໄລຍະການສ້າງລັດທີ່ປົກຄອງດ້ວຍກົດໝາຍ; ເປັນການຮັບຮູ້ ແລະ ຢືນຢັນເຖິງຜົນງານອັນຍິ່ງໃຫຍ່ຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໃນພາລະກິດຕໍ່ສູ້ກອບກູ້ເອົາເອກະລາດແຫ່ງຊາດ ແລະ ອິດສະຫຼະພາບ ກໍຄືໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ແລະ ພາລະກິດປ່ຽນແປງໃໝ່ຂອງພັກເຮົາ; ເປັນການຢືນຢັນໃຫ້ຊາວໂລກຮັບຮູ້ເຖິງຄວາມເປັນເອກະລາດແຫ່ງຊາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ ກໍຄືການຄົງຕົວ ແລະ ຂະຫຍາຍຕົວຂອງປະຊາຊົນລາວບັນດາເຜົ່າ ຢູ່ບົນດິນແດນອັນແສນຮັກແຫ່ງນີ້ ທີ່ບໍ່ສາມາດຕັດແຍກອອກຈາກກັນໄດ້; ທັງເປັນການສ່ອງແສງຢ່າງຈະແຈ້ງແລະຄົບຖ້ວນ ຄວາມມຸ່ງມາດປາຖະໜາອັນແຮງກ້າແລະຄວາມເດັດດ່ຽວຕັດສິນໃຈອັນສູງສົ່ງຂອງວິຖະນະຍາດແຫ່ງຊາດລາວ ເພື່ອພ້ອມກັນສູ້ຊົນປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສ້າງລັດເຮົາ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ແນໃສ່ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ທ່ານຍັງໃຫ້ຮູ້ຕື່ມວ່າ: ນັບແຕ່ລັດເຮົາໄດ້ປະກາດໃຊ້ລັດຖະທຳມະນູນແຫ່ງ ສປປລາວ ສະບັບປີ 1991 ເປັນຕົ້ນມາ, ໄດ້ມີການປັບປຸງລັດຖະທຳມະນູນໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງປະເທດຊາດໃນແຕ່ລະໄລຍະ ລວມມີ 3 ຄັ້ງ ຄື: ສະບັບປັບປຸງປີ 2003, ສະບັບປັບປຸງປີ 2015 ແລະສະບັບປັບປຸງປີ 2025 ແນໃສ່ຍູ້ແຮງພາລະກິດປ່ຽນແປງໃໝ່ໄປສູ່ລວງເລິກ ເຊິ່ງການຈັດງານແລ່ນມິນິມາລາທອນຄັ້ງນີ້ ເປັນການສົ່ງເສີມການອອກກຳລັງກາຍເພື່ອສຸຂະພາບ, ມິດຕະພາບ, ຄວາມສາມັກຄີ ແລະ ເປັນການສ້າງຂະບວນການຊຸກຍູ້ສົ່ງເສີມປີທ່ອງທ່ຽວລາວ ທັງເປັນການຊຸກຍູ້ສົ່ງເສີມ ແລະ ປຸກລະດົມທຶນ, ວັດຖຸປັດໄຈ ຊ່ວຍເຫຼືອປະຊາຊົນບັນດາເຜົ່າໃນທ້ອງຖິ່ນຕ່າງໆ ທີ່ຖືກຜົນກະທົບຈາກໄພທຳມະຊາດ.

ພິທີຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກຫຼາຍພາກສ່ວນ ເປັນຕົ້ນ ກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ,ບໍລິສັດລາວສະແຕນດາດ ຈຳກັດ, ບໍລິສັດ ວັງຕັດ ມາຍນິງ ກຣຸບ ຈຳກັດ, ບໍລິສັດ ເບຍລາວ ຈຳກັດ, ບໍລິສັດ ລ້ານຊ້າງ ມິນິໂຣນ໌ ຈຳກັດ, ສະມາຄົມຄຸນຄ່າລາວ, ສູນການແພດອະໄລແອນສ໌, ບໍລິສັດ ເອັສ ເອັມ ແອວ ຈຳກັດ (kok kokMove), ບໍລິສັດເທີ-ທີນບູນ ຈຳກັດ, ບໍລິສັດ ລາວສະຕາໂທລະຄົມ (ຢູນິເທວ), ທະນາຄານສົ່ງເສີມກະສິກຳ, Lao Youth Radio FM 90.0 Mhz, ຮ້ານຂາຍຢາໄສສະອາດຈຳໜ່າຍຢາ ແລະ ອຸປະກອນການແພດ, ຮ້ານອາຫານມັງກອນທອງແລະຮ້ານປັນຄາເຟ.

**(ນາງ ກຸກກີກ ບຸດດາໄຊ)**





## ສຸກສະບາຍຫາຍໂລດ

# ໝາກໄມ້ພື້ນບ້ານຕ້ານພະຍາດ

\# ຮຽບຮຽງໂດຍ: ທິວກະທິ



ສປປລາວ ມີໝາກໄມ້ຫຼາກຫຼາຍຊະນິດ ທີ່ມີລາຄາບໍ່ແພງ ທັງມີປະໂຫຍດ ແລະ ມີຄຸນຄ່າທາງໂພຊະນາການຫຼາຍຕໍ່ຮ່າງກາຍ ເພາະໄດ້ມີການວິເຄາະ, ວິໄຈ ແລະ ພິສູດທາງວິທະຍາສາດແລ້ວວ່າ ສານທີ່ມີໃນໝາກໄມ້ມີສັບພະຄຸນເປັນຢາຊ່ວຍກະຕຸ້ນການເຮັດວຽກຂອງລະບົບຕ່າງໆລວມທັງເສີມສ້າງພູມຕ້ານທານນຳອີກ; ມື້ນີ້, ໃນຄໍລຳ "ສຸກສະບາຍຫາຍໂລດ" ຈະມາແນະນຳໝາກໄມ້ພື້ນບ້ານທີ່ຊອກກິນໄດ້ງ່າຍ ແຕ່ມີສັບພະຄຸນຫຼາຍຄື:

**1. ໝາກສີດາ:** ເປັນໝາກໄມ້ທີ່ຊອກກິນງ່າຍ ລາຄາຖືກ ແລະມີກິນຕະຫຼອດປີເປັນໝາກໄມ້ທີ່ມີວິຕາມິນຊີ, ເສັ້ນໄຍ ແລະ ສານຕ້ານອະນຸມູນອິດສະຫຼະຫຼາຍ ຊ່ວຍກະຕຸ້ນການເຮັດວຽກຂອງເມັດເລືອດຂາວ ເຮັດໃຫ້ຮ່າງກາຍມີພູມຕ້ານທານກັບພະຍາດຫຼາຍຂຶ້ນ; ພ້ອມນັ້ນ, ຍັງຊ່ວຍເສີມສ້າງ ແລະ ປ້ອງກັນອາການເລືອດອອກຕາມຫວ່າງແຂ້ວໄດ້;

**2. ໝາກເຟືອງ:** ມີຄຸນຄ່າສານອາຫານຢ່າງຫຼວງຫຼາຍ ເພາະອຸດົມໄປດ້ວຍວິຕາມິນຊີ, ວິຕາມິນເອ, ເສັ້ນໄຍ, ຟອດສະຟໍຣັດ ແລະ ແຄວຊຽມ ຊ່ວຍປິ່ນປົວອາການເລືອດອອກຕາມຫວ່າງແຂ້ວແລະເປັນຢາລະບາຍເພື່ອແກ້ອາການຖອກທ້ອງແລະຊ່ວຍຂັບຂີ້ກະເທີ່;

**3. ໝາກພິລາ:** ເປັນໝາກໄມ້ທີ່ຣົດຊາດສົ້ມຫວານ ອອກລົດເປັນຢາບຳລຸງກຳລັງ, ຊ່ວຍບັນເທົາອາການເຈັບຄໍ, ເລືອດຈາງ, ເຈັບກະເພາະ, ຊ່ວຍຫ້າມເລືອດ, ປິ່ນປົວບາດແຜ, ຂັບໄລ່ແມ່ພະຍາດໃນລຳໄສ້ແລະແກ້ອາການຖອກທ້ອງ; ນອກນັ້ນ, ຍັງຊ່ວຍຫຼຸດອາການປວດຮາກໃນແມ່ມານໄດ້ ດ້ວຍການດື່ມນ້ຳໝາກພິລາຕອນເຊົ້າ ມື້ລະ 1 ຈອກ;

**4. ໝາກຫຸ່ງ:** ເປັນໝາກໄມ້ທີ່ແຊບ ແລະ ຄົນນິຍົມກິນຫຼາຍໃນບ້ານເຮົາ ໂດຍສະເພາະເມນູຕຳ; ໝາກຫຸ່ງອຸດົມໄປດ້ວຍວິຕາມິນຊີ, ເບຕາແຄໂລທີນ, ໄລໂຄພີນ, ແມກນີຊຽມ, ທອງແດງ, ໂພແທດຊຽມ ແລະເສັ້ນໄຍ ເມື່ອກິນເປັນປະຈຳຈະຊ່ວຍບຳລຸງຜິວໃຫ້ຊຸ່ມຊື່ນ; ເສັ້ນໃຍອາຫານຊ່ວຍໃນການຂັບຖ່າຍ ກຳຈັດໄຂມັນໃນລຳໄສ້, ຊ່ວຍໃຫ້ລຳໄສ້ສະອາດ ສາມາດດູດຊຶມອາຫານໄດ້ດີຂຶ້ນ.

**5. ໝາກພຸກ:** ປະກອບດ້ວຍເພກຕິກ (Pectin) ຊ່ວຍຫຼຸດຄໍເລສເຕີຣໍໃນເລືອດ ແລະ ໂມໂນໂຫບິນ ທີ່ຊ່ວຍໃນການຈັບສານກໍ່ມະເຮັງ; ພ້ອມນັ້ນ, ຖ້າກິນໝາກພຸກຫຼັງອາຫານຈະຊ່ວຍຂັບໄລ່ກາສໃນກະເພາະ ແລະ ລຳໄສ້, ຊ່ວຍໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ຢ່າງມີປະສິດທິພາບ.

**6. ໝາກຂາມ:** ມີສານແອນທາຄິວນິນ(Antraquinone) ທີ່ຊ່ວຍໃຫ້ປະຈຳເດືອນມາປົກກະຕິ ພ້ອມທັງມີອາຊິດອິນຊີຫຼາຍຊະນິດ, ເຊັ່ນ: ອາຊິດທາຣາຕິດ (Tartaric Acid) ແລະ ອາຊິດຊີຕິດ (Citric Acid) ມີລົດເປັນຢາລະບາຍເລັກນ້ອຍ, ມີເສັ້ນໄຍອາຫານທີ່ຊ່ວຍໃຫ້ການຂັບຖ່າຍສະດວກ.

**7. ໝາກຍົມ:** ເປັນໝາກໄມ້ທ້ອງຖິ່ນທີ່ໃຫ້ລົດຊາດສົ້ມຝາດ ແຕ່ອຸດົມໄປດ້ວຍທາດແຄວຊຽມ, ຟົດສະຟໍຣັດ, ວິຕາມິນເອ ແລະ ມີວິຕາມິນຊີຫຼາຍ ມີລົດຊ່ວຍສະໝານບາດແຜ, ເປັນຢາຂັບປັດສະວະແລະຊ່ວຍບັນເທົາອາການຫຼອດລົມອັກເສບ;

ການເລືອກກິນໝາກໄມ້ທຸກຊະນິດຕ້ອງເລືອກກິນໝາກໄມ້ສົດ ແລະ ສະອາດ ເພື່ອໃຫ້ຮ່າງກາຍໄດ້ຮັບຄຸນຄ່າສານອາຫານຫຼາຍທີ່ສຸດ ແຕ່ສິ່ງທີ່ສຳຄັນກວ່າສິ່ງອື່ນໃດ ຄືການດູແລສຸຂະພາບໃຫ້ແຂງແຮງຢູ່ສະເໝີ.




## ຂຶ້ນສານ

**(ເນື່ອງໃນວັນລັດຖະທຳມະນູນ ຄົບຮອບ 34 ປີ)**

\# ດອກຊ້ອນ ດອນໂຂງ

❈ ສານນີ້ຕັ້ງທ່ຽງໝັ້ນ ພັນຜູກໂຄງບິນ
ເອີ້ນວ່າສານປະຊາຊົນ ວ່າຄະດີຊາວບ້ານ
ບໍ່ແມ່ນພັນສານເຕ້ຍ ສານກະບຽງສານກະຕ່າ
ສານຍຸຕິທຳທ່ຽງແທ້ ສະພາຕັ້ງໃຫ້ວ່າຄວາມ

❈ ໃຜຫາກຄາຂອດຄ້າງ ທາງຂອດຄະດີຄວາມ
ຂໍຈົ່ງໄປຍັງສານ ເພື່ອກຽມການຟ້ອງ
ຄູ່ຄວາມໄຂຂານເອີ້ນ ເປັນຈຳເລີຍທັງໂຈດ
ໂຈດເປັນຄົນກ່າວຟ້ອງ ຈຳເລີຍແກ້ຂໍ້ກ່າວຫາ

❈ ຂໍ້ຂັດແຍ່ງທີ່ຄ້າງ ໄກ່ເກ່ຍບໍ່ເປັນຜົນ
ດຳເນີນການໃນສານ ໃຫ້ໂປ່ງໃສຈະແຈ້ງ
ພິພາກສາຕາມເນື້ອ ໃນຄະດີຂັດແຍ່ງ
ແຍງກົດໝາຍຖືກຕ້ອງ ຂໍ້ມູນມີບ່ອນອ້າງ ຈຶ່ງຕັດຊີ້ສັ່ງການ

❈ ສາມັນຊົນກ່າວໄວ້ ຂຶ້ນສານວ່າຄະດີຄວາມ
ຂັ້ນຕອນເໝືອນວົງຈອນ ແລ່ນໄຫຼໄປເລື້ອຍ
ຕາມລວງແລວວາງໄວ້ ໃຜມາລົນໃຜມາກ່ອນ
ຕັດວົງຈອນບໍ່ໄດ້ ເພາະເປັນເລື້ອງລະບຽບການ

❈ ທຸກທ່ານທີ່ກ່ຽວຂ້ອງ ຫວັງເພິ່ງທາງສານ
ອາໄສກົດໝາຍອີງ ພິພາກສາຈະແຈ້ງ
ຕ້ອງນັບຖືສານໄວ້ ຈິງໃຈບໍ່ອຽງເອ່ນ
ຄຳຕັດສິນຫຼືພິພາກສາວ່ານັ້ນ ສອງກໍ່ຕ້ອງນັບຖື ແທ້ເດີ

❈ ຖ້າວ່າຍັງຂອດຄ້າງ ຄຶງຢູ່ໃນໃຈ
ຂໍ້ມູນມີ ໃໝ່ມາອີງອ້າງ
ສາມາດອຸທອນໄດ້ ໄປຍັງສານສູງກວ່າ
ຄຳພິພາກສາ ຫາກຍັງຄືຜ່ານພົ້ນ ຄວນສຸດສ້ຽງເລື່ອງອຸທອນ ລະເດີ!

❈ ສານຢູ່ໃສທີ່ຕັ້ງ ວາງທ່າເປັນກາງ
ໃນນາມສາທາລະນະລັດ ກ່າວຄວາມໄຂຂໍ້
ຍໍກົດໝາຍເຍືອງຂຶ້ນ ຫຼັກການມາພິສູດ
ບໍ່ໄດ້ເອ່ນຂ້າງ ໃຫ້ຊົງເນື້ອງເຊື້ອມຄຸນ ດອກນາ!



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສຽມທ້ຽນ

❈ **23 ສິງຫາ** ປະຫວັດຈາລຶກໄວ້ ຜົນງານໃຫຍ່ ປວງຊົນລາວ ເຕົ້າໂຮມຄວາມສາມັກຄີ ອາດຫານຕໍ່ຕ້ານ ທວງສິດອິດສະຫຼະພາບ ຜືນແຜ່ນດິນອັນລ້ຳຄ່າ ປົດແອກ ເພື່ອຫຼຸດພົ້ນ ອອກຈາກການເປັນຂ້ອຍຂ້າ ປະຊາສຸກຊື່ນ ຂ້ອຍ ສາກົບຮູ້ທີ່ວເຖິງ **ຊອບແລ້ວ!**

❈ **ເດືອນ** ເກົ້າຫຍັບມໍ່ເຂົ້າບຸນຫໍ່ເຂົ້າປະດັບດິນ ໃນມື້ວັນສິບດັບທີ່ຈະມາເຖິງນີ້ ປະເພນີສືບສ້າງ ຊາວພຸດ ກະກຽມ ຕຽມອາຫານຄາວຫວານ ຫໍ່ໝົກຄວາຍໃຫ້ ຝາກ ສົ່ງໄປຍັງເບື້ອງ ດວງວິນຍານຍາດມິດ ສ່ຳພະເວສີພ່າ ພ້ອມ ກະທ່າສ້າງສົ່ງເຖິງ **ນັບແລ້ວ!**

## ຊອບຍິ້ມ

\# ພົ້ງຄົ້ງ

### ເລື່ອງ: ຊົມເຊີຍ

ມີເຫດການຊ່ວຍຄົນໂດຍໃຊ້ເຮລີກົບແຕ, ຄົນສິບເອັດຄົນຫ້ອຍຕ່ອງແຕ່ງຢູ່ກ້ອງເຮລີກົບແຕ ທີ່ກຳລັງບິນຢູ່ເທິງອາກາດ, ເປັນຜູ້ຊາຍສິບຄົນ ຍິງໜຶ່ງຄົນ

ແຕ່ເຊືອກທີ່ພວກເຂົາກຳລັງຫ້ອຍໂຫນນັ້ນ ເບິ່ງແລ້ວກຳລັງຊິຂາດ, ທຸກຄົນເຫັນດີວ່າ ຕ້ອງມີໜຶ່ງຄົນທີ່ຈະຕ້ອງເສຍສະຫຼະ ຖ້າບໍ່ດັ່ງນັ້ນກໍ່ຊິພາກັນຕາຍກັນໝົດ; ແຕ່ບໍ່ສາມາດຕົກລົງກັນໄດ້ວ່າໃຜຊິເປັນຄົນປ່ອຍມື ແລະ ແລ້ວຜູ້ຍິງຄົນນັ້ນກໍ່ເອົ້າຂຶ້ນມາວ່າ ລາວຊິເປັນຄົນເສຍສະຫຼະເອງ, ນາງພີມພ່າອອກມາດ້ວຍຄວາມນ້ອຍໃຈວ່າ "ປົກກະຕິກໍ່ມັກຈະຕ້ອງເສຍສະຫຼະເພື່ອລູກໆ ແລະ ຜົວເປັນປະຈຳ ໂດຍບໍ່ໄດ້ຫວັງສິ່ງຕອບແທນໃດໆ"

ທັນທີທີ່ຜູ້ຍິງຄົນນັ້ນເອົ້າຈົບ, ຜູ້ຊາຍທັງສິບຄົນກໍ່ຕົບມືຊົມເຊີຍດ້ວຍຄວາມຊາບຊຶ້ງໃຈ!!!



## ສຸພາສິດ-ຄະຕິເຕືອນໃຈ

\# ດອກຫຍ້າ

ຢູ່ບ້ານເພີ່ນ ຢ່າບົ້ງດູດາຍ
ປັ້ນງົວ ປັ້ນຄວາຍ ໃຫ້ລູກເພີ່ນຫຼີ້ນ

ລັດຖະສະພາຕ່າງປະເທດ

# ພັກຮ່ວມລັດຖະບານຍີ່ປຸ່ນ ເສຍໄຊໃນການເລືອກຕັ້ງສະພາສູງ




(Xinhua) - ການລົງຄະແນນສຽງເລືອກຕັ້ງສະມາຊິກສະພາສູງ ຊຸດທີ 27 ຂອງຍີ່ປຸ່ນໄດ້ເລີ່ມຂຶ້ນໃນຕອນເຊົ້າວັນອາທິດທີ 20 ກໍລະກົດຜ່ານມາ ໂດຍມີຜູ້ສະໝັກທັງໝົດ 522 ຄົນ ແຂ່ງຂັນກັນໃນການຕໍ່ສູ້ຢ່າງດຸເດືອດລະຫວ່າງລັດຖະບານ ກັບຝ່າຍຄ້ານ. ສະພາສູງປະກອບດ້ວຍສະມາຊິກ 248 ທີ່ນັ່ງ ມີວາລະດຳລົງຕຳແໜ່ງ 6 ປີ, ການເລືອກຕັ້ງຈະຈັດຂຶ້ນທຸກ 3 ປີ ໂດຍໃນແຕ່ລະຄັ້ງຈະມີການເລືອກຕັ້ງເຄິ່ງໜຶ່ງ; ຜູ້ມີສິດເລືອກຕັ້ງກຳລັງພິຈາລະນາ 125 ທີ່ນັ່ງ ໃນການເລືອກຕັ້ງຄັ້ງນີ້ລວມທັງທີ່ນັ່ງທີ່ຕ້ອງແຂ່ງຂັນເພື່ອຕື່ມໃສ່ທີ່ນັ່ງທີ່ວ່າງ.

ປັດຈຸບັນ, ພັກເສລີປະຊາທິປະໄຕ (LDP) ທີ່ເປັນພັກລັດຖະບານແລະພັກໂຄເມໂຕະ (Komeito) ທີ່ເປັນພັກຮ່ວມລັດຖະບານ ມີ 75 ທີ່ນັ່ງ ທີ່ຍັງບໍ່ໄດ້ລົງເລືອກຕັ້ງໃໝ່; ດັ່ງນັ້ນ, ພັກຮ່ວມລັດຖະບານ ຕ້ອງຊະນະ 50 ທີ່ນັ່ງ ໃນການເລືອກຕັ້ງຄັ້ງນີ້ ເພື່ອຮັກສາສຽງສ່ວນຫຼາຍ.

ການເລືອກຕັ້ງໄດ້ສິ້ນສຸດລົງໃນຕອນເຊົ້າວັນຈັນທີ 21 ກໍລະກົດ ໂດຍພັກ LDP ແລະພັກ Komeito ປະລາໄຊ; ໃນຈຳນວນທີ່ມີການແຂ່ງຂັນ, LDP ໄດ້ພຽງ 39 ທີ່ນັ່ງ (27 ເຂດເລືອກຕັ້ງ ແລະ 12 ຈາກການເປັນຕົວແທນຕາມສັດສ່ວນ), ຂະນະທີ່ Komeito ໄດ້ 8 ທີ່ນັ່ງ.

ເຖິງແມ່ນວ່າຈະລວມທີ່ນັ່ງທີ່ຍັງບໍ່ມີການແຂ່ງຂັນກໍຕາມ, ທັງສອງພັກກໍຍັງບໍ່ສາມາດໄດ້ຮັບສຽງສ່ວນຫຼາຍໃນສະພາສູງທີ່ມີທັງໝົດ 248 ທີ່ນັ່ງ ເຊິ່ງຖືເປັນຄັ້ງທຳອິດນັບແຕ່ສ້າງຕັ້ງພັກ LDP ໃນປີ 1955 ທີ່ພັກລັດຖະບານສູນເສຍການຄວບຄຸມສຽງສ່ວນຫຼາຍໃນທັງສອງສະພາ; ການພ່າຍແພ້ຄັ້ງນີ້ ເກີດຂຶ້ນພາຍຫຼັງການພ່າຍແພ້ໃນການເລືອກຕັ້ງສະພາຕ່ຳປີ 2024 ແລະການເລືອກຕັ້ງສະພານິຕິບັນຍັດນະຄອນຫຼວງໂຕກຽວ ປີ 2025.

ການສຳຫຼວດຄວາມເຫັນປະຊາຊົນ (exit poll) ຊີ້ໃຫ້ເຫັນວ່າ ອັດຕາເງິນເຟີ້ ແລະ ຄວາມບໍ່ໝັ້ນຄົງທາງເສດຖະກິດແມ່ນຄວາມເປັນຫ່ວງອັນດັບໜຶ່ງຂອງຜູ້ມີສິດເລືອກຕັ້ງ ໂດຍ "ມາດຕະການຕ້ານການເພີ່ມຂຶ້ນຂອງລາຄາສິນຄ້າ" ຖືກຍົກໃຫ້ເປັນບັນຫາທີ່ສຳຄັນທີ່ສຸດ.

ເຖິງວ່າຝ່າຍຄ້ານຍັງຄົງແຕກອອກຈາກກັນເປັນກຸ່ມນ້ອຍ, ແຕ່ຫຼາຍພັກກໍໄດ້ຮັບໄຊຊະນະທີ່ສຳຄັນ; ພັກປະຊາທິປະໄຕລັດຖະທຳມະນູນ ໄດ້ 22 ທີ່ນັ່ງ, ພັກປະຊາທິປະໄຕເພື່ອປະຊາຊົນ ໄດ້ 17 ທີ່ນັ່ງ ແລະ ພັກຊັນເຊໂຕະ (Sanseito) ທີ່ສ້າງຕັ້ງໃໝ່ ໄດ້ 14 ທີ່ນັ່ງ.

ຂະນະນີ້, ລັດຖະບານຂອງນາຍົກລັດຖະມົນຕີ ອິຊິບະ ກຳລັງປະເຊີນກັບຄວາມກົດດັນທີ່ເພີ່ມຂຶ້ນ ເມື່ອທັງສອງສະພາຢູ່ພາຍໃຕ້ການຄວບຄຸມຂອງສຽງສ່ວນໜ້ອຍ, ຈຶ່ງຕ້ອງສະແຫວງຫາການຮ່ວມມືຈາກພັກຝ່າຍຄ້ານ ເພື່ອຜ່ານຮ່າງກົດໝາຍ ແລະ ຊຸກຍູ້ວາລະກອງປະຊຸມ.

# ສະພາຕ່ຳສະຫະລັດ ຕັດເງິນຊ່ວຍເຫຼືອຕ່າງປະເທດ ແລະ ສື່, ຜ່ານກົດໝາຍສະກຸນເງິນດິຈິຕອນ 3 ສະບັບ




(Xinhua/AFP) - ວັນພະຫັດທີ 17 ກໍລະກົດຜ່ານມາ, ສະພາຜູ້ແທນປະຊາຊົນສະຫະລັດລົງມະຕິຮັບຮອງຮ່າງກົດໝາຍທີ່ຈະຕັດງົບປະມານຊ່ວຍເຫຼືອຕ່າງປະເທດ ແລະ ກິດຈະການສື່ສາທາລະນະ ພາຍຫຼັງທີ່ສະພາສູງຜ່ານຮ່າງກົດໝາຍດັ່ງກ່າວໃນຕອນເຊົ້າວັນດຽວກັນ ເຊິ່ງຈະຫຼຸດງົບປະມານຫຼາຍກວ່າ 9 ຕື້ໂດລາ ທີ່ລັດຖະສະພາໄດ້ຈັດສັນໃຫ້ແກ່ການຊ່ວຍເຫຼືອຕ່າງປະເທດ ແລະ ກິດຈະການສື່ສາທາລະນະ.

ການຕັດງົບປະມານແບ່ງອອກເປັນປະມານ 8 ຕື້ໂດລາ ຈາກບັນດາໂຄງການຊ່ວຍເຫຼືອຕ່າງປະເທດ, ສ່ວນຫຼາຍແມ່ນງົບປະມານທີ່ຈັດສັນໃຫ້ແກ່ອົງການເພື່ອການພັດທະນາສາກົນຂອງສະຫະລັດ (USAID).

ຕັດເງິນ 1.1 ຕື້ໂດລາ ທີ່ຈັດສັນໃຫ້ແກ່ອົງການເພື່ອການກະຈາຍສຽງສາທາລະນະ (Corporation for Public Broadcasting - CPB) ເຊິ່ງປະທານາທິບໍດີ ໂດນັນ ທຣຳ ແລະ ຝ່າຍອະນຸລັກນິຍົມ ໄດ້ຕຳນິຕິຕຽນສະຖານີສອງແຫ່ງຂອງ CPB ໄດ້ແກ່: ວິທະຍຸກະຈາຍສຽງແຫ່ງຊາດ (National Public Radio - NPR) ແລະ ລະບົບໂທລະພາບສາທາລະນະ (Public Broadcasting System - PBS) ວ່າມີຄວາມເອນອຽງເຂົ້າຂ້າງຝ່າຍຊ້າຍ; ຍິ່ງໄປກວ່ານັ້ນ, ພັກຣີພັບລີກັນ ຍັງຖືວ່າສະຖານີເຫຼົ່ານີ້ ເປັນຄ່າໃຊ້ຈ່າຍທີ່ບໍ່ຈຳເປັນສຳລັບຜູ້ເສຍພາສີ.

ນອກຈາກນີ້, ໃນວັນດຽວກັນ, ສະພາຕ່ຳຍັງໄດ້ມີມະຕິຜ່ານກົດໝາຍສຳຄັນກ່ຽວກັບສະກຸນເງິນດິຈິຕອນ 3 ສະບັບ ໄດ້ແກ່: ກົດໝາຍຄວາມຊັດເຈນ (Clarity Act) ຢ່າງງ່າຍດາຍ ໂດຍມີເປົ້າໝາຍເພື່ອສ້າງຂອບການຄຸ້ມຄອງທີ່ຊັດເຈນຍິ່ງຂຶ້ນສຳລັບສະກຸນເງິນດິຈິຕອນ ແລະ ຊັບສິນດິຈິຕອນອື່ນໆ; ຮ່າງກົດໝາຍດັ່ງກ່າວ ມີຈຸດປະສົງເພື່ອຊີ້ແຈງກົດລະບຽບຂອງອຸດສາຫະກຳ ແລະ ແບ່ງອຳນາດການຄຸ້ມຄອງລະຫວ່າງຄະນະກຳມະການຫຼັກຊັບ ແລະ ຕະຫຼາດຫຼັກຊັບ (Securities and Exchange Commission - SEC) ກັບ ຄະນະກຳມະການຊື້ຂາຍ ສິນຄ້າ ໃນ ອະນາຄົດ (Commodity Futures Trading Commission - CFTC).

ກົດໝາຍ GENIUS Act ເຊິ່ງປະມວນການໃຊ້ stablecoin ຫຼືສະກຸນເງິນດິຈິຕອນທີ່ຜູກຕິດກັບຊັບສິນທີ່ມີຄວາມໝັ້ນທ່ຽງ ເຊັ່ນເງິນໂດລາສະຫະລັດ ຫຼື ພັນທະບັດສະຫະລັດ ລວມເຖິງກຳນົດລະບຽບການຕ່າງໆເຊັ່ນ: ຜູ້ອອກສະກຸນເງິນດິຈິຕອນຕ້ອງມີຊັບສິນສະພາບຄ່ອງສຳຮອງ ມູນຄ່າເທົ່າກັບສະກຸນເງິນດິຈິຕອນທີ່ຕົນເອງຖືຄອງ.

ຮ່າງກົດໝາຍສະບັບທີ 3 ທີ່ໄດ້ຮັບການອະນຸມັດຈາກສະພາຕ່ຳ ທີ່ນຳໂດຍພັກຣີພັບລີກັນ ແມ່ນກົດໝາຍການເຝົ້າລະວັງຕໍ່ຕ້ານສະກຸນເງິນດິຈິຕອນຂອງທະນາຄານກາງສະຫະລັດ (Anti-CBDC Surveillance State Act) ເຊິ່ງມີຈຸດປະສົງເພື່ອສະກັດກັ້ນການອອກເງິນດິຈິຕອນຂອງທະນາຄານກາງ (CBDC) ຫຼື ເງິນໂດລາສະຫະລັດດິຈິຕອນທີ່ອອກໂດຍທະນາຄານກາງສະຫະລັດ ຫຼື Fed (Federal Reserve), ເຖິງແມ່ນວ່າໃນປັດຈຸບັນຍັງບໍ່ມີແຜນການສຳລັບຄວາມພະຍາຍາມດັ່ງກ່າວກໍຕາມ.

ສະມາຊິກສະພາຕ່ຳຈາກພັກຣີພັບລີກັນໃຫ້ເຫດຜົນວ່າ CBDC ອາດເຮັດໃຫ້ລັດຖະບານກາງຕິດຕາມ, ກວດກາແລະຄວບຄຸມການເຮັດທຸລະກຳທາງການເງິນຂອງພົນລະເມືອງທຳມະດາ ເຊິ່ງຖືເປັນການທຳລາຍຄວາມເປັນສ່ວນຕົວ ແລະ ເສລີພາບຂອງພົນລະເມືອງ.

* CBDC - Central Bank Digital Currency: ສະກຸນເງິນດິຈິຕອນຂອງທະນາຄານກາງ

*GENIUS-Guiding and Establishing National Innovation for U.S. Stablecoins: ການໃຫ້ຄຳແນະນຳແລະການສ້າງນະວັດຕະກຳລະດັບຊາດ ສຳລັບສະກຸນເງິນດິຈິຕອນຂອງສະຫະລັດ




# Slovenia ເປັນສະມາຊິກ ອີຢູ ຊາດທຳອິດ ອອກກົດໝາຍຫ້າມຄ້າຂາຍອາວຸດກັບ ອິດສະຣາແອນ



(AFP) - ສະໂລເວນີປະກາດຫ້າມການຄ້າອາວຸດທັງໝົດກັບອິດສະຣາແອນ ຕາບໃດທີ່ຍັງມີສົງຄາມຢູ່ເຂດກາຊາ, ເປັນຄັ້ງທຳອິດທີ່ປະເທດສະມາຊິກສະຫະພາບເອີຣົບ (EU) ອອກກົດໝາຍແບບນີ້.

ລັດຖະບານສະໂລເວເນຍລະບຸໃນຖະແຫຼງການທີ່ນຳອອກເຜີຍແຜ່ເມື່ອຕອນແລງວັນພະຫັດທີ 31 ກໍລະກົດຜ່ານມາວ່າ ສະໂລເວເນຍ ເປັນສະມາຊິກອີຢູປະເທດທຳອິດ ທີ່ອອກກົດໝາຍຫ້າມການນຳເຂົ້າ-ສົ່ງອອກ ແລະ ການຂົນສົ່ງອາວຸດເຂົ້າ-ອອກຈາກອິດສະຣາແອນ.

ຖະແຫຼງການກ່າວວ່າລັດຖະບານສະໂລເວນີ ພວມດຳເນີນການ "ຢ່າງເອກະລາດ" ເນື່ອງຈາກອີຢູບໍ່ສາມາດໃຊ້ມາດຕະການທີ່ເປັນຮູບປະທຳຕໍ່ຄວາມຂັດແຍ້ງພາຍໃນ ແລະ ຄວາມແຕກແຍກ; ຖະແຫຼງການຢ້ຳອີກວ່າປະຊາຊົນໃນເຂດກາຊາເສຍຊີວິດຢ່າງຕໍ່ເນື່ອງ ຍ້ອນຖືກປະຕິເສດການຊ່ວຍເຫຼືອດ້ານມະນຸດສະທຳຢ່າງເປັນລະບົບ, ຈຶ່ງຖືເປັນໜ້າທີ່ຂອງລັດຜູ້ມີຄວາມຮັບຜິດຊອບ ທີ່ຈະໃຊ້ມາດຕະການເພື່ອສະກັດກັ້ນວິກິດການດັ່ງກ່າວ "ເຖິງແມ່ນວ່າມັນໝາຍເຖິງການຕ້ອງກ້າວລ່ວງຜູ້ອື່ນກໍຕາມ".

ລັດຖະບານສະໂລເວນີ ຢືນຢັນວ່າ ໄດ້ໂຈະການສົ່ງອອກອາວຸດຍຸດໂທປະກອນໄປຍັງອິດສະຣາແອນ ນັບຕັ້ງແຕ່ສົງຄາມຢູ່ເຂດກາຊາເກີດຂຶ້ນເມື່ອເດືອນຕຸລາ 2023.

# ພັກ-ລັດຖະບານ Burundi ຊະນະເລືອກຕັ້ງສະພາສູງ



(Xinhua) - ຄະນະກຳມະການເລືອກຕັ້ງເອກະລາດແຫ່ງຊາດ (National Independent Electoral Commission - CENI) ຂອງບູຣຸນດີ ໄດ້ປະກາດໃນວັນສຸກທີ 25 ກໍລະກົດຜ່ານມາວ່າ ສະພາແຫ່ງຊາດເພື່ອການປົກປ້ອງຊາທິປະໄຕ-ກອງກຳລັງເພື່ອການປົກປ້ອງປະຊາທິປະໄຕ (National Council for the Defense of Democracy-Forces for the Defense of Democracy "CNDD-FDD") ເຊິ່ງເປັນພັກລັດຖະບານ ຊະນະທັງ 10 ທີ່ນັ່ງໃນສະພາສູງ, ຫຼັງຈາກການເລືອກຕັ້ງເມື່ອວັນທີ 23 ກໍລະກົດ.

"ພັກ CNDD-FDD ຊະນະທັງໝົດ 10 ທີ່ນັ່ງໃນສະພາສູງ ສຳລັບອາຍຸການດຳລົງຕຳແໜ່ງແຕ່ປີ 2025-2030; ອີງຕາມລັດຖະທຳມະນູນແຫ່ງຊາດ ແລະ ປະມວນກົດໝາຍການເລືອກຕັ້ງ, ບຸກຄົນຈາກຊົນເຜົ່າສ່ວນນ້ອຍບັດວາ (Batwa) 3 ຄົນ ໄດ້ຮັບການແຕ່ງຕັ້ງ ໃຫ້ຈັດຕັ້ງສະພາສູງ ທີ່ມີສະມາຊິກ 13 ທີ່ນັ່ງ" ພຣອສເປີ ນະຕາຣົວາມິເຢ (Prosper Ntahorwamiye) ປະທານ CENI ກ່າວລະຫວ່າງການປະກາດຜົນການເລືອກຕັ້ງສະພາສູງເບື້ອງຕົ້ນ ເມື່ອວັນທີ 23 ກໍລະກົດ ເຊິ່ງຈັດຂຶ້ນຢູ່ສູນກາງເມືອງຕ່າງໆຂອງແຂວງ.

ຕາມຂໍ້ມູນຂອງ ນະຕາຣົວາມິເຢ, ທັງ 5 ແຂວງໃນປະເທດອາຟຣິກາຕາເວັນອອກແຫ່ງນີ້ ມີສິດມີສະມາຊິກສະພາສູງ 2 ທີ່ນັ່ງ ເຊິ່ງສ່ວນໃຫຍ່ແມ່ນຊາຍ ແລະຍິງ. ສະມາຊິກສະພາເມືອງ 1,053 ໃນຈຳນວນ 1,054 ຈາກທັງໝົດ 1,055 ທີ່ນັ່ງ ທີ່ໄດ້ຮັບການເລືອກຕັ້ງເມື່ອວັນທີ 5 ມິຖຸນາ ໄດ້ເຂົ້າຮ່ວມການລົງຄະແນນສຽງ, ກວມ 99.91%; ພັກ CNDD-FDD ຊະນະການເລືອກຕັ້ງດ້ວຍຄະແນນສຽງ 99.72% ຈາກສະມາຊິກສະພາສູງຊາວຮູຕູ (Hutu) ແລະ 99.62% ຈາກສະມາຊິກສະພາສູງຊາວທຸດຊີ (Tutsi).

ປະທານ CENI ກ່າວວ່າ "ຄວາມສົມດຸນທາງດ້ານເຊື້ອຊາດ ແລະ ເພດ ໄດ້ຮັບການເຄົາລົບ, ນັ້ນແມ່ນ ສະມາຊິກສະພາສູງຊາວຮູຕູ 50% ແລະ ສະມາຊິກສະພາສູງຊາວທຸດຊີ 50%, ແລະ ສະມາຊິກສະພາສູງເພດຍິງ ຢ່າງໜ້ອຍ 30% ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແຫ່ງຊາດ ແລະ ປະມວນກົດໝາຍການເລືອກຕັ້ງ" ນະຕາຣົວາມິເຢກ່າວເສີມວ່າ ໃນຄັ້ງນີ້, ສະມາຊິກສະພາສູງເພດຍິງ ມີເຖິງ 50% ແລ້ວ; ທັງລະບຸວ່າ ຫຼັງຈາກການເລືອກຕັ້ງ, ສະພາສູງຈະປະກອບດ້ວຍສະມາຊິກ 13 ຄົນ, ຊາຍ 7 ຄົນ ແລະ ຍິງ 6 ຄົນ. "ຜົນຂອງການເລືອກຕັ້ງສະມາຊິກສະພາສູງເບື້ອງຕົ້ນເຫຼົ່ານີ້ ຈະຖືກຍື່ນໄປຍັງສານລັດຖະທຳມະນູນເພື່ອໃຫ້ການຮັບຮອງໂດຍໄວ.

ໃນການເລືອກຕັ້ງສະພາແຫ່ງຊາດແລະສະພາເຂດທີ່ຈັດຂຶ້ນເມື່ອວັນທີ 5 ມິຖຸນາ, ພັກ CNDD-FDD ທີ່ກຳອຳນາດ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ.

ບູຣຸນດີ ຍັງມີກຳນົດຈັດການເລືອກຕັ້ງຂັ້ນບ້ານ ໃນວັນທີ 25 ສິງຫານີ້, ການເລືອກຕັ້ງປະທານາທິບໍດີຄັ້ງຕໍ່ໄປ ມີກຳນົດຈັດຂຶ້ນໃນປີ 2027.

# ກູບາ ຍົກເລີກເກນອາຍຸສູງສຸດ 60 ປີ ສຳລັບຜູ້ສະໝັກເປັນປະທານປະເທດ



(AFP) - ສ.ກູບາ ໄດ້ຍົກເລີກເກນອາຍຸສູງສຸດ 60 ປີ ສຳລັບຜູ້ສະໝັກຮັບເລືອກຕັ້ງປະທານປະເທດເຊິ່ງເປັນສ່ວນໜຶ່ງຂອງການປະຕິຮູບລັດຖະທຳມະນູນ ທີ່ສະພາແຫ່ງຊາດອຳນາດປະຊາຊົນ ຮັບຮອງເອົາເມື່ອວັນສຸກທີ 18 ກໍລະກົດຜ່ານມາ.

ມາດຕະການດັ່ງກ່າວເຊິ່ງໄດ້ຮັບການອະນຸມັດຈາກສະພາແຫ່ງລັດ (ຄະນະລັດຖະມົນຕີ) ບໍ່ໄດ້ກຳນົດຂໍ້ຈຳກັດເກນອາຍຸຂອງບຸກຄົນ ໃນການໃຊ້ຄວາມສາມາດທາງຮ່າງກາຍ ແລະ ຈິດໃຈຢ່າງເຕັມທີ່, ພ້ອມກັບຄວາມຈົງຮັກພັກດີ ແລະ ແນວທາງການປະຕິວັດ.

ເຖິງຢ່າງໃດກໍຕາມ, ຂໍ້ຈຳກັດກ່ຽວກັບວາລະການດຳລົງຕຳແໜ່ງປະທານປະເທດ 2 ສະໄໝ, ສະໄໝລະ 5 ປີ ແລະ ຜູ້ສະໝັກຮັບເລືອກຕັ້ງ ຕ້ອງມີອາຍຸຕໍ່າສຸດ 35 ປີນັ້ນ ຍັງບໍ່ມີການປ່ຽນແປງ.

ອະດີດປະທານປະເທດ ຣາອູນ ຄາສໂຕຣ (Raul Castro) ອາຍຸ 94 ປີ ຍັງດຳລົງຕຳແໜ່ງໃນສະພາແຫ່ງຊາດອຳນາດປະຊາຊົນ ແລະ ເປັນຜູ້ທຳອິດທີ່ລົງຄະແນນສຽງສະໜັບສະໜູນການປະຕິຮູບ ເຊິ່ງຈະສົ່ງຜົນຕໍ່ການເລືອກຕັ້ງປະທານປະເທດໃນປີ 2028.

ມິເກວ ດີອາຊ-ຄາເນວ (Miguel Diaz-Canel) ປະທານປະເທດຄົນປັດຈຸບັນ ອາຍຸ 65 ປີ ໄດ້ຮັບເລືອກຕັ້ງເມື່ອປີ 2018 ແລະ 2023.

ການກຳນົດວາລະການດຳລົງຕຳແໜ່ງ ແລະ ອາຍຸ ໃນລັດຖະທຳມະນູນປີ 2019 ເປັນການປ່ຽນແປງຄັ້ງໃຫຍ່ຫຼວງ ຫຼັງຈາກ ຟີເດວ ຄາສໂຕຣ (Fidel Castro) ແລະ ນ້ອງຊາຍຂອງລາວ ຣາອູນ ຂຶ້ນກຳອຳນາດເປັນເວລາຫົກທົດສະວັດ.

ໃນປີ 2016, ຟີເດວ ໄດ້ມອບອຳນາດໃຫ້ກັບນ້ອງຊາຍ ເນື່ອງຈາກບັນຫາສຸຂະພາບ; ທ່ານໄດ້ເສຍຊີວິດໃນທ້າຍປີນັ້ນ, ພາຍຫຼັງເກືອບເຄິ່ງສະຕະວັດທີ່ນຳພາກູບາ.

ຣາອູນຂຶ້ນເປັນປະທານປະເທດຢ່າງເປັນທາງການໃນປີ 2008 ຂະນະມີອາຍຸ 76 ປີ; ໃນປີ 2021, ທ່ານໄດ້ກະສຽນອາຍຸຈາກການດຳລົງຕຳແໜ່ງເລຂາທິການໃຫຍ່ຜູ້ທີໜຶ່ງຂອງພັກກອມມູນິດກູບາ ແລະ ມອບອຳນາດໃຫ້ກັບ ດີອາຊ-ຄາເນວ.

# ອົດສະຕຣາລີ ຜ່ານກົດໝາຍຫຼຸດໜີ້ການສຶກສາ 20%, ຂະຫຍາຍຂອບເຂດກົດໝາຍສື່ສັງຄົມ ຫ້າມເຍົາວະຊົນໃຊ້ຢູທູບ




(AFP) - ວັນທີ 31 ກໍລະກົດຜ່ານມາ, ລັດຖະສະພາອົດສະຕຣາລີ ຮັບຮອງກົດໝາຍຫຼຸດໜີ້ເງິນກູ້ຢືມເພື່ອການສຶກສາທັງໝົດລົງ 20% ເຮັດໃຫ້ສາມາດຊຳລະໜີ້ລວມມູນຄ່າ 10 ຕື້ໂດລາສະຫະລັດ ສຳລັບນັກສຶກສາຫຼາຍກວ່າ 3 ລ້ານຄົນ; ລັດຖະບານຈະໃຊ້ກົດໝາຍສື່ສັງຄົມເພື່ອຫ້າມເຍົາວະຊົນອາຍຸຕໍ່າກວ່າ 16 ປີ ເຂົ້າເຖິງຢູທູບ.

ຊາວອົດສະຕຣາລີຈຳນວນຫຼາຍໃຊ້ເງິນກູ້ຂອງລັດຖະບານເພື່ອການສຶກສາໃນມະຫາວິທະຍາໄລ ຫຼືການສຶກສາຂັ້ນສູງອື່ນໆ; ແຕ່ດ້ວຍຄ່າຮຽນທີ່ເພີ່ມສູງຂຶ້ນ, ປະລິນຍາຂັ້ນພື້ນຖານ ມີຄ່າໃຊ້ຈ່າຍເຖິງ 25 ພັນໂດລາ ຫຼືຫຼາຍກວ່ານັ້ນໃນແຕ່ລະປີ ເຊິ່ງເຮັດໃຫ້ນັກສຶກສາມີໜີ້ສິນເພີ່ມຂຶ້ນຢ່າງຕໍ່ເນື່ອງ.

ນາຍົກລັດຖະມົນຕີແອນໂທນີ ອັລບາເນເຊ (Anthony Albanese) ຜູ້ນຳອົດສະຕຣາລີ ໃຫ້ຄຳໝັ້ນສັນຍາວ່າ ຈະຫຼຸດໜີ້ເງິນກູ້ຢືມເພື່ອການສຶກສາທີ່ເປັນມາດຕະການສຳຄັນເພື່ອຫຼຸດຜ່ອນຄ່າຄອງຊີບ ໃນລະຫວ່າງການເລືອກຕັ້ງທີ່ອໍໄປເມື່ອຕົ້ນເດືອນພຶດສະພາ; ມາດຕະການດັ່ງກ່າວຈະຊ່ວຍຫຼຸດໜີ້ຄ່າຮຽນຂອງນັກສຶກສາລົງ 3,500 ໂດລາ ຈາກໜີ້ສະເລ່ຍ 18 ພັນໂດລາ.

ວັນພຸດທີ 30 ກໍລະກົດ, ນາງ ອານິກາ ເວລສ໌ (Anika Wells) ລັດຖະມົນຕີກະຊວງການສື່ສານ ກ່າວວ່າ ເດັກຊາວອົດສະຕຣາລີ 4 ໃນ 10 ຄົນ ໄດ້ເບິ່ງເນື້ອຫາທີ່ເປັນອັນຕະລາຍຢູ່ໃນຢູທູບ, ຂະນະທີ່ລັດຖະບານຕ້ອງການໃຫ້ "ເດັກໆ ຮູ້ຕົວຕົນຂອງຕົນເອງ" ກ່ອນທີ່ເວທີຕ່າງໆຈະຄາດເດົາໄດ້ວ່າ "ພວກເຂົາເປັນຄົນແບບໃດ".

ກົດໝາຍດັ່ງກ່າວ ຈະຫ້າມເດັກເຂົ້າໃຊ້ເວັບໄຊສື່ສັງຄົມເຊັ່ນ: ເຟສບຸກ, ຕິກຕັອກ ແລະ ອິນສະຕາແກຣມ (Instagram) ຈົນກວ່າພວກເຂົາຈະອາຍຸຄົບ 16 ປີ; ແຕ່ຢູທູບ ຈະຖືກຍົກເວັ້ນ ເນື່ອງຈາກມີການນຳໃຊ້ຢ່າງກວ້າງຂວາງໃນຫ້ອງຮຽນ.

ນາຍົກລັດຖະມົນຕີ ອັລບາເນເຊ ກ່າວໃນວັນດຽວກັນວ່າ ເຍົາວະຊົນອາຍຸຕໍ່າກວ່າ 16 ປີ ຈະບໍ່ສາມາດມີບັນຊີຢູ່ໃນຢູທູບໄດ້ ລວມທັງ ເຟສບຸກ, ອິນສະຕາແກຣມ, ສະແນບແຊັດ (Snapchat), ຕິກຕັອກ, ເອັກຊ໌ (X ແມ່ນທະວິດເຕີ "Twitter" ໃນເມື່ອກ່ອນ) ແລະ ເວທີອື່ນໆ ທັງກ່າວຕື່ມວ່າ ເຖິງແມ່ນການຈຳກັດອາຍຸອາດຈະບໍ່ຖືກປະຕິບັດຢ່າງສົມບູນແບບເຊັ່ນດຽວກັບຂໍ້ຈຳກັດດ້ານເຫຼົ້າ, ແຕ່ກໍຍັງ "ເປັນສິ່ງທີ່ຖືກຕ້ອງ".

ທາງໂຄສົກຂອງຢູທູບ ເອີ້ນການປະກາດຫຼ້າສຸດຂອງລັດຖະບານອົດສະຕຣາລີວ່າ ເປັນ "ການປີ້ນກັບທີ່ໜ້າຕົກໃຈ" ໂດຍເນັ້ນໜັກວ່າ ຢູທູບ ເປັນເວທີການແບ່ງປັນວິດີໂອ, ບໍ່ແມ່ນສື່ສັງຄົມ.

ເຖິງຢ່າງໃດກໍຕາມ, ກົດໝາຍສະບັບນີ້ທີ່ຈະມີຜົນບັງຄັບໃຊ້ໃນວັນທີ 10 ທັນວາ 2025 ບໍ່ຄ່ອຍມີລາຍລະອຽດໃດໆກ່ຽວກັບວິທີການບັງຄັບໃຊ້ ເຊິ່ງສ້າງຄວາມວິຕົກກັງວົນໃນບັນດາຜູ້ຊ່ຽວຊານວ່າ ມັນຈະເປັນພຽງສັນຍະລັກ ທີ່ບໍ່ສາມາດບັງຄັບໃຊ້ໄດ້.



## ເງົ່າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ມີໜ້ອຍແຕ່ມີປະສິດທິພາບ... ນັ້ນລະດີ!

ໃນປັດຈຸບັນ ຫຼາຍປະເທດໄດ້ສຳເລັດແຜນປະຢັດຣັດສາຍແອວເພື່ອແກ້ໄຂບັນຫາຫຍຸ້ງຍາກທາງເສດຖະກິດດ້ວຍຫຼາຍໆວິທີ ເຊັ່ນການຕັດຮອນຈຳນວນພະນັກງານທີ່ເປັນມະນຸດເງິນເດືອນລັດ, ຫຼຸດເງິນເດືອນພະນັກງານຂັ້ນສູງ, ປັບຈຳນວນກະຊວງ ແລະ ຈຳນວນສະມາຊິກລັດຖະບານລົງ, ຫຼຸດຜ່ອນການໃຊ້ຈ່າຍງົບປະມານຂອງລັດໃນສິ່ງທີ່ເຫັນວ່າເປັນການຟຸມເຟືອຍ ແລະ ອື່ນໆ; ແຕ່ໃນນັ້ນສ່ວນໃຫຍ່ແມ່ນການຫຼຸດຈຳນວນມະນຸດເງິນເດືອນລັດລົງ ແຕ່ການຫຼຸດດັ່ງກ່າວຕ້ອງບໍ່ແຕະຕ້ອງຄຸນນະພາບ ແລະ ປະສິດທິພາບຂອງວຽກ, ກົງກັນຂ້າມ ຕ້ອງຮັບປະກັນຫຼັກການ "ກະທັດຣັດທີ່ມີສະມັດຖະພາບ, ຄຸນນະພາບ ແລະ ປະສິດທິພາບ".

ຢູ່ຫວຽດນາມ ໃນທ້າຍເດືອນທັນວາ 2016, ທ່ານ ຫງວຽນ ເຕິນ ຢຸງ ນາຍົກລັດຖະມົນຕີຫວຽດນາມໃນເວລານັ້ນ ໄດ້ອອກຂໍ້ຕົກລົງເພື່ອກຳນົດທິດປະຕິຮູບກົງຈັກລັດຖະບານໃນໄລຍະແຕ່ປີ 2016-2021 ແນໃສ່ຫຼຸດຜ່ອນຈຳນວນພະນັກງານລັດລົງ ໃຫ້ໄດ້ 10% ຂອງຈຳນວນທີ່ມີຢູ່ໃນເວລານັ້ນ; ເພື່ອບັນລຸຕາມຄາດໝາຍທີ່ວາງອອກ, ບັນດາສຳນັກງານອົງການຂອງລັດ ຕ້ອງປະຕິບັດດັ່ງຕໍ່ໄປນີ້: ການຮັບພະນັກງານໃໝ່ໃນແຕ່ລະປີຕ້ອງບໍ່ໃຫ້ເກີນຈຳນວນເຄິ່ງໜຶ່ງຂອງຈຳນວນພະນັກງານທີ່ເຂົ້າຮັບບຳນານໃນປີນັ້ນຕົວຢ່າງຖ້າມີຜູ້ຮັບບຳນານໃນປີນັ້ນ 50 ຄົນ, ພະນັກງານທີ່ຈະຮັບໃໝ່ຕ້ອງບໍ່ກາຍ 25 ຄົນ, ແຕ່ກໍມີຂໍ້ຍົກເວັ້ນສຳລັບໂຮງຮຽນ ຫຼື ໂຮງໝໍຂອງລັດ ທີ່ຫາກໍໄດ້ຮັບການສ້າງຕັ້ງຂຶ້ນໃໝ່ນັ້ນສາມາດຮັບພະນັກງານໃໝ່ໃນຈຳນວນຫຼາຍກວ່າ ແຕ່ກໍຕ້ອງມີການກວດກາກ່ຽວກັບຄວາມຈຳເປັນຢ່າງເຄັ່ງຄັດ; ສຳລັບພະນັກງານລັດໃນຂັ້ນບ້ານ, ຕາແສງ ແລະ ຫົວໜ່ວຍລັດຖະການຂັ້ນຮາກຖານນັ້ນຕ້ອງຄວບສອງຕຳແໜ່ງງານ. ນອກຈາກມາດຕະການຫຼຸດຈຳນວນພະນັກງານເພື່ອເປົ້າໝາຍຫຼຸດຜ່ອນພາລະແບກຫາບຂອງລັດຖະບານດ້ານງົບປະມານເງິນເດືອນແລ້ວ, ໃນໄລຍະຜ່ານມາ ທາງການຫວຽດນາມ ຍັງໄດ້ດຳເນີນປັ້ນປະຕິຮູບລະບົບເງິນເດືອນ 3 ຄັ້ງຄື: ໃນປີ 1960, 1985 ແລະ 1993 ແລະ ກໍຍັງສືບຕໍ່ປັບປຸງໃຫ້ແທດເໝາະກັບສະພາບຄວາມຕ້ອງການຕົວຈິງ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍຂອງພະນັກງານມີຄວາມສົມດູນກັນເທື່ອລະກ້າວ.

ການປະຕິຮູບເງິນເດືອນນີ້ ແມ່ນເພື່ອປັບປຸງຄຸນນະພາບຂອງພະນັກງານ, ເພື່ອປະຢັດງົບປະມານເອົາໄວ້ໃຊ້ຈ່າຍໃນການພັດທະນາປະເທດ ແທນທີ່ຈະສິ້ນເປືອງໄປກັບເງິນເດືອນ ແລະ ເງິນອຸດໜູນຕ່າງໆ, ແນ່ນອນການປະຕິຮູບດ້ານເງິນເດືອນນັ້ນ ຕ້ອງໄປສົມຄູ່ກັບການປະຕິຮູບຕຳແໜ່ງງານ ແລະ ການກວດກາຄືນຕຳແໜ່ງບໍລິຫານທີ່ກ່ຽວຂ້ອງ; ການປະຕິຮູບລະບົບເງິນເດືອນໄດ້ມີຂຶ້ນພາຍຫຼັງໄດ້ຄົ້ນຄວ້າພົບວ່າ ອັດຕາເງິນເດືອນ ແລະ ເງິນອຸດໜູນ ຍັງບໍ່ທັນສົມເຫດສົມຜົນໃນທາງປະຕິບັດ. ກ່ອນໜ້າມີການປະຕິຮູບ, ການກຳນົດຊັ້ນ ແລະ ຂັ້ນເງິນເດືອນນັ້ນ ແມ່ນປະຕິບັດຕາມອາຍຸການເຊັ່ນ: ຊັ້ນ, ຂັ້ນ ແລະ ໜ້າທີ່ວິຊາສະເພາະຂອງພະນັກງານ; ເມື່ອພິຈາລະນາແລ້ວເຫັນວ່າ ຫຼັກການນີ້ມີການສິ້ນເປືອງເງິນອຸດໜູນຕຳແໜ່ງສູງຫຼາຍ ເພາະຕຳແໜ່ງງານຕ່າງໆ ກໍຮຽກຮ້ອງໃຫ້ປະຕິບັດເງິນອຸດໜູນ ເຮັດໃຫ້ອັດຕາເງິນອຸດໜູນນັ້ນ ສູງກວ່າເງິນເດືອນພື້ນຖານຊ້ຳອີກ.

ດັ່ງນັ້ນ, ການປະຕິຮູບ ຕ້ອງເລີ່ມຈາກການກຳນົດຕຳແໜ່ງງານຄືນໃໝ່ ໂດຍກຳໃຫ້ໄດ້ວ່າພະນັກງານແຕ່ລະຄົນເຮັດຫຍັງ, ມີບົດບາດທີ່ຕັ້ງແນວໃດ, ຄວາມຮັບຜິດຊອບຕໍ່ໜ້າທີ່ເດ ເປັນແນວໃດ; ພິເສດ ການກຳນົດຕຳແໜ່ງງານຕ້ອງຕິດພັນກັບຄວາມສາມາດ. ຢູ່ຫວຽດນາມ ມີຂໍ້ກຳນົດວ່າ ອົງການໃດມີພະນັກງານແຕ່ 20 ຄົນລົງມາ ແມ່ນບໍ່ໃຫ້ມີຮອງຫົວໜ້າກາຍ 2 ຄົນ, ຖ້າມີພະນັກງານກາຍ 20 ຄົນຈຶ່ງອະນຸຍາດໃຫ້ມີຜູ້ຮອງ 3 ຄົນ (ຍົກເວັ້ນອົງການທີ່ກຸ້ມຕົນເອງ); ການກວດຄືນຕຳແໜ່ງນີ້ ປະຕິບັດເປັນເອກະພາບແຕ່ຜູ້ນຳສູງສຸດລົງຮອດຂັ້ນຮາກຖານ.



## ຮັບມພາສາ ຜ່ານສຽງຫົວ

# ແລກປ່ຽນຢ່າງເປັນທຳ

*#ບ່າວກະບື*

**ເມື່ອ**ຄວາຍຂອງທ້າວກີໂກ້ຍ ເລັດລອດເຂົ້າໄປນາ ແລະ ກັດກິນຕົ້ນເຂົ້າຄົນເຮືອນໃກ້ໝົດໄປຈ່າບອນໜຶ່ງ, ຄົນເຮືອນໃກ້ກໍ່ໄດ້ອອກປາກຕໍ່ວ່າຕໍ່ຂານເລື່ອງນີ້. ທ້າວກີໂກ້ຍຕອບວ່າ: "ບໍ່ຕ້ອງອິດກັງວົນດອກ... ມື້ອື່ນຂ້ອຍຊິຈັດການສົ່ງຂີ້ຄວາຍທີ່ໄດ້ຈາກຕົ້ນເຂົ້າໄປໃຫ້ເຈົ້າຄືນ"

# Fair Exchange

*#BAOKBU*

When Kykoy's buffalo strayed into the neighbour's field and ate up some of his rice plants, the neighbour complained, to which Kykoy replied, "Don't worry, tomorrow I will send you all the dung my buffalo yields from your rice plants".

## ຕາມພາສາ ກາຕູນ



ປະສົບການເດີນທາງໃນການເລືອກຊຸມ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank



## ສພຊ...

(ຕໍ່ຈາກໜ້າ 1)

ຄັນຂອງລັດຖະທຳມະນູນ;ຄວາມເປັນມາໃນການສ້າງ ແລະ ປັບປຸງລັດຖະທຳມະນູນ; ຕີລາຄາດ້ານດີ,ດ້ານອ່ອນແລະບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນຕະຫຼອດໄລຍະ 34 ປີ. ພ້ອມກັນນັ້ນ, ກໍໃຫ້ຮູ້ເຖິງເນື້ອໃນສຳຄັນ ແລະ ການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2025. ທ່ານຍັງກ່າວຕື່ມວ່າ: ຕະຫຼອດ 34 ປີທີ່ຜ່ານມາ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ລັດແຫ່ງສປປລາວ ໄດ້ເປັນເຈົ້າການ ແລະ ໃຈກາງ ໃນການປະຕິບັດລັດຖະທຳມະນູນ ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງຢ່າງໝັ້ນຄົງຕະຫຼອດມາ, ເສດຖະກິດ-ວັດທະນະທຳສັງຄົມ ໄດ້ຮັບການພັດທະນາ ແລະ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ,ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພໂດຍພື້ນຖານ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງ ແລະ ຍົກລະດັບສູງຂຶ້ນ, ບົດບາດອິດທິພົນຂອງພັກ ແລະ ລັດເຮົາ ໄດ້ຮັບການຍົກສູງຂຶ້ນໃນເວທີພາກພື້ນ ແລະ ສາກົນ; ຄຽງຄູ່ກັບຜົນສຳເລັດທີ່ພົ້ນເດັ່ນ ແລະ ໃຫຍ່ຫຼວງນັ້ນ, ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຍັງມີດ້ານອ່ອນ ແລະ ຂໍ້ຄົງຄ້າງຫຼາຍຢ່າງ ທີ່ເລັ່ງທວງໃຫ້ພວກເຮົາພ້ອມກັນຕັດສິນໃຈສູ້ຊົນແກ້ໄຂໃຫ້ໄດ້ເປັນກ້າວໆ ແນໃສ່ເສີມຂະຫຍາຍທ່າແຮງສັງລວມຂອງປະເທດຊາດ ແລະ ສາກົນ ເພື່ອສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ຂຶ້ນສູ່ສັງຄົມນິຍົມ "ເຮັດໃຫ້ປະຊາຊົນລາວບັນດາເຜົ່າຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ".

**(ນາງ ອາລິນ ສຸພົມມະປະດິດ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ